ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*ທະນາຄານແຫ່ງ ສປປ ລາວ*
*ກົມບໍລິການທະນາຄານ,*
*ກອງທຶນສົ່ງເສີມການເຂົ້າຫາແຫຼ່ງທຶນ ໃນ ສປປ ລາວ (LAFF)*

# ກອບນະໂຍບາຍ ວ່າດ້ວຍ

## ສິ່ງແວດລ້ອມ, ສຸຂະພາບ ແລະ ຄວາມປອດໄພ

***ສໍາລັບກອງທຶນສົ່ງເສີມການເຂົ້າເຖິງແຫຼ່ງທຶນໃນ ສປປ ລາວ (LAFF)***

*ວຽງຈັນ, ເດືອນ ສິງຫາ 2021*

# ຄຳນຳ

ກອບນະໂຍບາຍນີ້ (Framework) ໄດ້ຖືກກະກຽມ ສອດຄ່ອງກັບ ຂໍ້ແນະນຳຂອງ KfW ວ່າດ້ວຍຄວາມຍືນຍົງ ແລະ ຂໍ້ແນະນຳຂອງອົງການຈັດຕັ້ງສາກົນອື່ນໆ ທີ່ນຳໃຊ້ ກ່ຽວກັບ ການປົກປ້ອງສິ່ງແວດລ້ອມ, ສຸຂະພາບ ແລະ ຄວາມປອດໄພ (EHS) (ເຊັ່ນ ອົງການແຮງງານສາກົນ ILO, ກຸ່ມການເງິນສາກົນ IFC ແລະ ກົດໝາຍແຮງງານແຫ່ງຊາດ). ກອບນະໂຍບາຍນີ້ ໄດ້ກຳນົດຫຼັກການ/ເງື່ອນໄຂ ປະເມີນຄວາມສ່ຽງດ້ານສິ່ງແວດລ້ອມ ແລະ ສັງຄົມ ສຳລັບ ແຕ່ລະ ວິສາຫະກິດ (ຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຫຼື MSMEs) ເຊິ່ງຊອກຫາແຫຼ່ງທຶນ ພາຍໃຕ້ ການເອື້ອອຳນວຍຄວາມສະດວກສິນເຊື່ອທັງໝົດ ທີ່ອີງໃສ່ໂຄງການ ເຊິ່ງມີຊື່ວ່າ "ໂຄງການເຂົ້າຫາແຫຼ່ງທຶນ ຫຼື LAFF" ໃນ ສປປ ລາວ; ກອບນະໂຍບາຍໄດ້ ກຳນົດການດຳເນີນວຽກງານບັນເທົາຄວາມສ່ຽງ ແລະ ຜົນກະທົບດ້ານບໍ່ດີ ທີ່ອາດເກີດຂຶ້ນ ຕໍ່ປະຊາຊົນທ້ອງຖິ່ນ ແລະ ສິ່ງແວດລ້ອມ ໃນບ່ອນທີ່ ພິຈາລະນາແລ້ວເຫັນວ່າ ໂຄງການ LAFF ສົມຄວນປ່ອຍເງິນກູ້ລາຍຍ່ອຍ ແລະ ມັນຍັງໄດ້ກະກຽມອົງການຈັດຕັ້ງ ເພື່ອດຳເນີນວຽກງານ ກອບນະໂຍບາຍ ໃນຊ່ວງການຈັດຕັ້ງປະຕິບັດ ໂຄງການ LAFF.

ອີງໃສ່ ອົງປະກອບ 3 ຂອງ ໂຄງການ LAFF ເຊິ່ງກ່ຽວຂ້ອງກັບການຊ່ວຍເຫຼືອ ທະນາຄານ ແຫ່ງ ສປປ ລາວ (BoL) ແລະ ສະຖາບັນການເງິນຄູ່ຮ່ວມງານ (PFIs ) ໃນການສ້າງ ແລະ ຈັດຕັ້ງປະຕິບັດ ລະບົບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMS), ມັນເປັນບັນຫາພື້ນຖານ ຕໍ່ວິທີການດຳເນີນງານຂອງໂຄງການ LAFF, ເຊິ່ງເງິນກູ້ຂະໜາດນ້ອຍ ທີ່ປ່ອຍໃຫ້ ວິສາຫະກິດ (ຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຫຼື MSMEs) ຈະສ້າງບັນຫາໜ້ອຍໃນເລື່ອງຄວາມສ່ຽງ ສິ່ງແວດລ້ອມ, ສັງຄົມ, ສຸຂະພາບ ແລະ ຄວາມປອດໄພ (ESHS). ຄາດການວ່າ ເງິນກູ້ລາຍຍ່ອຍສ່ວນຫຼາຍ ຈະເປັນປະເພດ ຄວາມສ່ຽງ "B" (ຄວາມສ່ຽງບໍ່ຮ້າຍແຮງ) ຫຼື "C" (ຄວາມສ່ຽງຕ່ຳ). ບໍ່ພົບເຫັນຄວາມສ່ຽງ ປະເພດ "A" (ຄວາມສ່ຽງລະດັບສູງ/ຮ້າຍແຮງ), "B+" (ຄວາມສ່ຽງລະດັບກາງ) ຍ້ອນວ່າ ປະເພດຂອງກິດຈະກຳ/ທຸລະກິດ, ຂະໜາດຂອງເງິນກູ້ຈຳກັດ ແລະ ຄວາມສາມາດຂອງ PFIs ແລະ MSMEs. ສະນັ້ນ ກອບນະໂຍບາຍນີ້ ຈະເນັ້ນໜັກໃສ່ແຕ່ ຄວາມສ່ຽງປະເພດ "B" (ຄວາມສ່ຽງປານກາງ) ຫຼື "C" (ຄວາມສ່ຽງຕ່ຳ).

ທະນາຄານ ແຫ່ງ ສປປ ລາວ (BoL) ເຊິ່ງແມ່ນ ອົງການຈັດຕັ້ງປະຕິບັດໂຄງການ (ຫຼືPEA) ແລະ LAFF ມີໜ້າທີ່ຮັບຜິດຊອບ, ຮັບປະກັນວ່າ ໄດ້ປະຕິບັດ ແລະ ດຳເນີນວຽກງານຖືກຕ້ອງກັບ ບັນດາຫຼັກການ/ຂໍ້ກຳນົດ/ເງື່ອນໄຂ ຂອງກອບນະໂຍບາຍສະບັບນີ້ ໃນຊ່ວງການຈັດຕັ້ງປະຕິບັດໂຄງການ LAFF.

ຕະຫຼອດເວລາຈັດຕັ້ງປະຕິບັດໂຄງການ LAFF, ຂໍ້ແນະນຳຂອງ KfW ແລະ ອົງການຈັດຕັ້ງສາກົນອື່ນໆ (ເຊັ່ນ ອົງການແຮງງານສາກົນ ILO, ອົງການ-ການເງິນສາກົນ IFC ແລະ ກົດໝາຍແຮງງານແຫ່ງຊາດ) ຈະຖືກນຳໃຊ້ ໃຫ້ຖືກຕ້ອງຕາມຫຼັກການ/ເງື່ອນໄຂ ພ້ອມທັງຕອບສະໜອງຄວາມຕ້ອງການຂອງ ວິສາຫະກິດ (ຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຫຼື MSMEs)/ສະຖາບັນການເງິນ (PFIs ) ເຊິ່ງແມ່ນຄູ່ຮ່ວມງານສຳຄັນຂອງໂຄງການ LAFF.

ເອກະສານສະບັບນີ້ ບໍ່ແມ່ນຫຼັກການຕາຍຕົວ ແລະ ສາມາດດັດແກ້ປ່ຽນແປງ ໃຫ້ຖືກຕ້ອງສອດຄ່ອງກັບການປ່ຽນແປງກິດຈະກຳຂອງໂຄງການ LAFF. ຖ້າວ່າສະພາບການເໝາະສົມ ກໍສາມາດດັດແກ້ກອບນະໂຍບາຍສະບັບນີ້ໄດ້ ໂດຍປຶກສາຫາລື ກັບ KfW ແລະ BoL ກ່ອນຈະມີການດັດແກ້ ຫຼື ປັບປຸງ, ການດັດແກ້ປັບປຸງ ຕ້ອງໄດ້ຮັບການເຫັນດີຈາກ KfW.

# ສາລະບານ


1 ພາກສະເໜີ....5

1.1 ປະຫວັດຄວາມເປັນມາ....5

1.2 ອົງປະກອບໂຄງການ....5

1.3 ສະຖານະພາບຂອງການຈັດຕັ້ງປະຕິບັດໂຄງການ ໃນປັດຈຸບັນ....5

1.4 ກົດໝາຍ ແລະ ໂຄງສ້າງສະຖາບັນ....5

1.5 ຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ທີ່ອາດເປັນໄປໄດ້ ຂອງໂຄງການ....6

1.6 ຈຸດປະສົງຂອງການກັ່ນກອງ ແລະ ປະເມີນສິ່ງແວດລ້ອມ ແລະ ສັງຄົມ ຂອງທຸລະກິດທີ່ສະເໜີ 6

1.7 ກະກຽມການຈັດຕັ້ງປະຕິບັດ....7

2 ຂະບວນການ/ຂັ້ນຕອນກັ່ນກອງ/ປະເມີນສິ່ງແວດລ້ອມ ແລະ ສັງຄົມ....7

2.1 ການຮ້ອງຂໍກູ້ຢືມເງິນ....7

2.2 ກັ່ນກອງ/ປະເມີນ ແລະ ຈັດປະເພດຄວາມສ່ຽງສິ່ງແວດລ້ອມ ແລະ ສັງຄົມ....7

2.3 ຫຼັກການ ແລະ ວິທີການກັ່ນກອງ/ປະເມີນຄວາມສ່ຽງ....8

2.4 ຫຼັກການ ແລະ ວິທີການຈັດປະເພດຜົນກະທົບ....9

2.5 ບັນຊີທຸລະກິດ ທີ່ໂຄງການບໍ່ສະໜັບສະໜູນທຶນ....9

3 ການປະເມີນ ແລະ ທົບທວນຄືນ (ກວດກາ) ສິ່ງແວດລ້ອມ ແລະ ສັງຄົມ....9

3.1 ການປະເມີນ ແລະ ທົບທວນຄືນ ສິ່ງແວດລ້ອມ ແລະ ສັງຄົມ ສໍາລັບທຸລະກິດຈັດເປັນປະເພດ C 9

3.2 ການປະເມີນ ແລະ ທົບທວນຄືນ ສິ່ງແວດລ້ອມ ແລະ ສັງຄົມ ສໍາລັບທຸລະກິດຈັດເປັນປະເພດ B 9

3.3 ການຊ່ວຍເຫຼືອດ້ານເຕັກນິກ ແລະ ການສ້າງຄວາມສາມາດດ້ານປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ 10

4 ການຕິດຕາມ ແລະ ກວດກາ....10

4.1 ການຕິດຕາມ ແລະ ກວດກາຜົນງານ ໂດຍ PFIs....10

4.2 ການລາຍງານ....10

4.3 ກົນໄກຮັບຟັງການຮ້ອງທຸກ....10

5 ການປຶກສາຫາລື ແລະ ການເຜີຍແຜ່ກອບນະໂຍບາຍ....10

ເອກະສານຊ້ອນທ້າຍ....12

ເອກະສານຊ້ອນທ້າຍ 1: ບັນຊີກິດຈະກໍາທີ່ໂຄງການບໍ່ສະໜັບສະໜູນ ແລະ ຂໍ້ແນະນໍາຂອງກຸ່ມ KfW...12

ເອກະສານຊ້ອນທ້າຍ 2: ມາດຖານການປົກປ້ອງ E&S ຂອງ IFC....14

ເອກະສານຊ້ອນທ້າຍ 3: ມາດຖານສິ່ງແວດລ້ອມ ແລະ ສັງຄົມ 2 & 9 ຂອງ WB....15

ເອກະສານຊ້ອນທ້າຍ 4: ສົນທິສັນຍາພື້ນຖານຂອງອົງການແຮງງານສາກົນ ILO....16

ເອກະສານຊ້ອນທ້າຍ 5: ດໍາລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຂະໜາດ SMEs (ເປັນ PDF File)....**Error! Bookmark not defined.**

ເອກະສານຊ້ອນທ້າຍ 6: ນະໂຍບາຍແຫ່ງຊາດ, ກົດໝາຍ ແລະ ລະບຽບ....17

ເອກະສານຊ້ອນທ້າຍ 7: ການຈັດປະເພດ ຄວາມສ່ຽງປະເພດ "B" (ຄວາມສ່ຽງປານກາງ) ຫຼື "C" (ຄວາມສ່ຽງຕໍ່າ)....18

ເອກະສານຊ້ອນທ້າຍ 8: ຂໍ້ແນະນໍາຕໍ່ PEA/PFIs/MSMEs ໃນການສ້າງ ແລະ ຈັດຕັ້ງປະຕິບັດ ລະບົບສິ່ງແວດລ້ອມ ແລະ ສັງຄົມ ESMS....19

ເອກະສານຊ້ອນທ້າຍ 9: ແບບຟອມປະເມີນຜົນກະທົບ (E&S)....20

ເອກະສານຊ້ອນທ້າຍ 10: ຂະບວນການ/ຂັ້ນຕອນກວດກາຄືນການປະເມີນ/ກັ່ນກອງການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ....24

ເອກະສານຊ້ອນທ້າຍ 11: ກົດໝາຍ ແລະ ລະບຽບຫຼັກການ ທີ່ກ່ຽວຂ້ອງກັບ MSMEs....25

ເອກະສານຊ້ອນທ້າຍ 12: ແບບຟອບ/ການສັງລວມລາຍງານການດໍາເນີນວຽກງານ E&S....26

ເອກະສານຊ້ອນທ້າຍ 13: ສັງລວມຕົວຊີ້ວັດ/ວັດແທກອັນພື້ນຖານ ສໍາລັບ ລະບົບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMS)....27

## **ຄຳຫຍໍ້**

| | |
|---|---|
| AFC | ບໍລິສັດທີ່ປຶກສາດ້ານການເງິນ ແລະ ກະສິກຳ |
| BMZ | ກະຊວງພັດທະນາ ແລະ ຮ່ວມມືດ້ານເສດຖະກິດຂອງ ສະຫະພັນເຢຍລະມັນ |
| BOL | ທະນາຄານແຫ່ງ ສປປ ລາວ |
| DTMFI | ສະຖາບັນການເງິນຈຸລະພາກຮັບເງິນຝາກ |
| EHS | ສິ່ງແວດລ້ອມ, ສຸຂະພາບ ແລະ ຄວາມປອດໄພ |
| EHSGs | ຂໍແນະນຳດ້ານ ສິ່ງແວດລ້ອມ, ສຸຂະພາບ ແລະ ຄວາມປອດໄພ |
| EIA | ການປະເມີນຜົນກະທົບສິ່ງແວດລ້ອມ |
| ESMS | ລະບົບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ |
| ESS | ມາດຖານສິ່ງແວດລ້ອມ ແລະ ສັງຄົມ |
| FC | ການຮ່ວມມືດ້ານການເງິນ |
| FI | ສະຖາບັນການເງິນ |
| GOL | ລັດຖະບານ ສປປ ລາວ |
| GPA | ສັນຍາໂຄງການ ແລະ ການຊ່ວຍເຫຼືອລ້າ |
| IEE | ການປະເມີນເບື້ອງຕົ້ນກ່ຽວກັບ ຜົນກະທົບຕໍ່ສິ່ງແວດລ້ອມ (ບສຕສ) |
| IFC | ອົງການ-ການເງິນສາກົນ |
| ILO | ອົງການແຮງງານສາກົນ |
| KfW | ທະນາຄານພັດທະນາຂອງເຢຍລະມັນ |
| Lao PDR | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| LMU | ຫ້ອງການບໍລິຫານໂຄງການ LAFF |
| MFI | ສະຖາບັນການເງິນຈຸລະພາກ |
| MSMEs | ວິສາຫະກິດ (ຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ) |
| NGO | ອົງການຈັດຕັ້ງສາກົນ |
| PFI | ສະຖາບັນການເງິນຄູ່ຮ່ວມງານ |
| PS | ມາດຖານດຳເນີນງານ |
| SME | ວິສາຫະກິດຂະໜາດນ້ອຍ ແລະ ກາງ |
| TA | ການຊ່ວຍເຫຼືອດ້ານເຕັກນິກ |
| WB | ທະນາຄານໂລກ |
| WBG | ກຸ່ມທະນາຄານໂລກ |

# 1 ພາກສະເໜີ

## 1.1 ປະຫວັດຄວາມເປັນມາ

1. ໃນປີ 2014, ໂຄງການເອື້ອອຳນວຍຄວາມສະດວກແບບສິນເຊື່ອຂາຍຍົກທັງໝົດ ທີ່ອີງໃສ່ໂຄງການ ສໍາລັບທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ໂດຍມີຊື່ວ່າ "ໂຄງການເຂົ້າຫາແຫຼ່ງທຶນ ຫຼື LAFF" ໃນ ສປປ ລາວ ໄດ້ຖືກສ້າງຕັ້ງຂຶ້ນຢູ່ ທະນາຄານ ແຫ່ງ ສປປ ລາວ ເຊິ່ງໃຫ້ທຶນໂດຍ ກະຊວງພັດທະນາ ແລະ ຮ່ວມມືດ້ານເສດຖະກິດຂອງສະຫະພັນເຢຍລະມັນ ໂດຍຜ່ານ ທະນາຄານພັດທະນາ KfW. ໂຄງການ LAFF ຊ່ວຍເຫຼືອການເຂົ້າເຖິງແຫຼ່ງທຶນໃຫ້ແກ່ ວິສາຫະກິດ (ຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ) ໂດຍສະເໜີ ສິນເຊື່ອສະກຸນເງິນກີບໄລຍະຍາວຕາມເງື່ອນໄຂກົນໄກການຕະຫຼາດ ເພື່ອເສີມສ້າງຄວາມເຂັ້ມແຂງດ້ານການເງິນ ແລະ ການດໍາເນີນງານໃຫ້ແກ່ ທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ໂດຍສຸມຍຸດທະສາດໃສ່ ພາກວິສາຫະກິດ (ຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ).

2. ໃນເດືອນ ກັນຍາ 2017, ບໍລິສັດທີ່ປຶກສາດ້ານເງິນ ແລະ ກະສິກໍາ (AFC) ໄດ້ຖືກວ່າຈ້າງດ້ວຍຈາກທຶນຂອງ BMZ ຜ່ານ KfW ໃຫ້ມາຈັດຕັ້ງປະຕິບັດການຊ່ວຍເຫຼືອດ້ານເຕັກນິກ (ຊ່ຽວຊານ) ໃຫ້ ທະນາຄານແຫ່ງ ສປປ ລາວ ໃນການບໍລິຫານຄຸ້ມຄອງໂຄງການ LAFF ແລະ ສະຖາບັນການເງິນຄູ່ຮ່ວມງານ PFIs ໂດຍສຸມໃສ່ ບັນລຸ ເງື່ອນໄຂໃນການໃຫ້ທຶນໂຄງການ LAFF ແລະ ເສີມສ້າງຄວາມສາມາດຂອງ PFIs ໃນການຕອບສະໜອງຜະລິດຕະພັນສິນເຊື່ອຢ່າງມີຄຸນນະພາບດີ, ໂດຍອີງໃສ່ຄວາມຕ້ອງການ ໃຫ້ MSEs, ໂດຍນໍາໃຊ້ ວິທີການປ່ອຍສິນເຊື່ອ ແລະ ການດໍາເນີນງານຢ່າງມີປະສິດທິຜົນ.

3. ການຈັດຕັ້ງປະຕິບັດໂຄງການໄລຍະທີ I ສໍາເລັດຜົນ, KfW ໄດ້ຕອບສະໜອງເງິນທຶນຕື່ມຈໍານວນ 6 ລ້ານຢູໂຣ (ລວມທັງທຶນໄລຍະທີ I, ມີທັງໝົດ 9 ລ້ານຢູໂຣ) ເພື່ອເລີ່ມໄລຍະທີ II ຂອງໂຄງການ LAFF ເຊິ່ງເລີ່ມປະຕິບັດໃນເດືອນ ກັນຍາ 2020.

4. ໃນຊ່ວງການຈັດຕັ້ງປະຕິບັດ ເງິນກູ້ລາຍຍ່ອຍສະເພາະຈະຖືກລະບຸ, ກອບນະໂຍບາຍວ່າດ້ວຍສິ່ງແວດລ້ອມ, ສຸຂະພາບ ແລະ ຄວາມປອດໄພ (ຫຼື Framework) ຖືກສ້າງຂຶ້ນ ເພື່ອຮັບປະກັນວ່າ ບັນດາກິດຈະກໍາຂອງໂຄງການ LAFF ແລະ ເງິນກູ້ລາຍຍ່ອຍ ໄດ້ຖືກປະເມີນ ແລະ ຈະບໍ່ສ້າງຜົນກະທົບບໍ່ດີຕໍ່ຊຸມຊົນ ແລະ ສິ່ງແວດລ້ອມທ້ອງຖິ່ນ. ກອບນະໂຍບາຍ (Framework) ລວມມີ (1) ກັ່ນກອງ/ປະເມີນສິ່ງແວດລ້ອມ ແລະ ສັງຄົມ, ເຊິ່ງລວມມີ ບັນຊີກິດຈະກໍາ ເຊິ່ງໂຄງການ LAFF ບໍ່ສະໜັບສະໜູນທຶນ (ເບິ່ງເອກະສານຊ້ອນທ້າຍ 1); (2) ກັ່ນກອງ/ປະເມີນ ແລະ ຈັດປະເພດຄວາມສ່ຽງດ້ານສິ່ງແວດລ້ອມ ແລະ ສັງຄົມ; (3) ການຕິດຕາມ, ກວດກາເງິນກູ້ລາຍຍ່ອຍ ແລະ ກົນໄກແກ້ໄຂຄໍາຮ້ອງທຸກ ແລະ (4) ການປຶກສາຫາລື ແລະ ເຜີຍແຜ່ກອບນະໂຍບາຍ (Framework)

## 1.2 ອົງປະກອບໂຄງການ

5. ໂຄງການ LAFF ປະກອບມີ 5 ອົງປະກອບ:

(1) ສ້າງຄວາມສາມາດໃຫ້ ທະນາຄານແຫ່ງ ສປປ ລາວ (BoL)
(2) ສ້າງຄວາມສາມາດໃຫ້ ສະຖາບັນການເງິນຄູ່ຮ່ວມງານ (PFIs)
(3) ສ້າງຄວາມສາມາດໃຫ້ ວິສາຫະກິດ (ຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ MSMEs)
(4) ໃຫ້ທຶນກິດຈະກໍາເປັນມິດກັບສິ່ງແວດລ້ອມ (Green Finance)
(5) ໃຫ້ທຶນລະບົບດີຈີຕອນ Digital Finance

## 1.3 ສະຖານະພາບຂອງການຈັດຕັ້ງປະຕິບັດໂຄງການ ໃນປັດຈຸບັນ

6. ປັດຈຸບັນ ມີ 3 ທະນາຄານທຸລະກິດ ແລະ 2 ສະຖາບັນການເງິນຈຸລະພາກ ເຂົ້າຮ່ວມການຈັດຕັ້ງປະຕິບັດໂຄງການ LAFF

## 1.4 ກົດໝາຍ ແລະ ໂຄງສ້າງສະຖາບັນ

7. ໃນ ສປປ ລາວ, ວິສະຫະກິດ ຂະໜາດນ້ອຍ ແລະ ກາງ (SMEs) ໄດ້ຖືກຈັດເປັນ 3 ປະເພດ ແລະ ຕາມຄວາມສາມາດຂອງວິສະຫະກິດ, ອີງຕາມດໍາລັດເລກທີ 25/ນຍ ລົງວັນທີ 16//2017, (ເບິ່ງເອກະສານຊ້ອນທ້າຍ 5), ຍັງບໍ່ມີນິຕິກໍາສະເພາະກວມເອົາ ພາກ SME, ກົດໝາຍ (ມີຜົນບັງຄັບໃຊ້ ກັບ SMEs), ເຊິ່ງນິຕິທຸລະກິດທັງໝົດ ຕ້ອງປະຕິບັດຕາມຂໍ້ກໍານົດ/ເງື່ອນໄຂຄືກັນ ໃນດ້ານສິ່ງແວດລ້ອມ ແລະ ສັງຄົມ ນັ້ນແມ່ນ ກົດໝາຍປົກປ້ອງສິ່ງແວດລ້ອມ (ສະບັບປັບປຸງ ປີ 2012) ໄດ້ກໍານົດການຄຸ້ມຄອງ ແລະ ຄວບຄຸມຢ່າງມີປະສິດທິຜົນຕໍ່ກັບບັນຫາມົນລະພິດ, ສິ່ງເສດເຫຼືອ ແລະ ວັດຖຸສານພິດຈາກແຫຼ່ງຕ່າງໆ.

8. ນະໂຍບາຍແຫ່ງຊາດ, ກົດໝາຍ ແລະ ລະບຽບຫຼັກການ ເຊິ່ງປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ ນຳໃຊ້ ແລະ ກຳນົດໄວ້ໃນກອບນະໂຍບາຍນີ້ (ເບິ່ງເອກະສານຊ້ອນທ້າຍ 6) ແລະ ກົດໝາຍ ແລະ ລະບຽບຫຼັກການ ສະເພາະ ທີ່ກ່ຽວຂ້ອງກັບ MSMES (ເບິ່ງເອກະສານຊ້ອນທ້າຍ 11) .

9. ກ່ຽວກັບການປົກປ້ອງສັງຄົມ, ດຳລັດເລກທີ 84/ນຍ ລົງວັນທີ 5/4/2016 ວ່າດ້ວຍການຊົດເຊີຍ ແລະ ຈັດສັນຍົກຍ້າຍ ໄດ້ກຳນົດ ໃຫ້ຜູ້ພັດທະນາໂຄງການ/ຜູ້ລົງທຶນ ຊົດເຊີຍການສູນເສຍທີ່ດິນ ແລະ ຊັບສິນອື່ນໆ ໃນມູນຄ່າທົດແທນ ແລະ ນອກຈາກນີ້ ຍັງສ້າງຂໍ້ແນະນຳດ້ານເຕັກນິກ ເພື່ອຊ່ວຍການຈັດຕັ້ງປະຕິບັດດຳລັດດັ່ງກ່າວ. ໃນ ສປປ.ລາວ ມີ 50 ຊົນເຜົ່າທີ່ໄດ້ຈັດເຂົ້າຢູ່ໃນ 4 ໝວດພາສາ ເຊິ່ງຖືກຕ້ອງກັບມາດຖານກຳນົດຕາມ (ມາດຖານດຳເນີນງານ 7 ຂອງ IFC PS 7 ແລະ ມາດຖານສິ່ງແວດລ້ອມ ແລະ ສັງຄົມຂອງທະນາຄານໂລກ **WB ESS 7**) ກ່ຽວກັບປະຊາຊົນດັ່ງເດີມ.

## 1.5 ຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ທີ່ອາດເປັນໄປໄດ້ ຂອງໂຄງການ

10. ໂຄງການ LAFF ໃຫ້ເງິນກູ້ແກ່ສະຖາບັນການເງິນຄູ່ຮ່ວມງານ (“PFIs”). ສະຖາບັນການເງິນຄູ່ຮ່ວມງານ (“PFIs”) ຈະນຳໃຊ້ເງິນກູ້ ເພື່ອເສີມເງິນກູ້ລາຍຍ່ອຍໃຫ້ ວິສາຫະກິດ (ຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ) (“MSMEs”), ລວມທັງວິສະຫະກິດນອກລະບົບ ແລະ ຄົວເຮືອນເຮັດກິດຈະກຳທຸລະກິດໃນເຂດຊົນນະບົດ. ຈຸດປະສົງຂອງໂຄງການ ແມ່ນຊ່ວຍເຫຼືອ ພາກການເງິນທຸລະກິດໃນ ສປປ ລາວ ໃນການສະໜອງບໍລິການເງິນທຶນຕາມຄວາມຕ້ອງການ ແລະ ແບບຍືນຍົງ ໃຫ້ແກ່ MSMEs. ທີ່ຕັ້ງສະເພາະ, ປະເພດ, ລະດັບ ແລະ ຂອບເຂດຂອງຜົນກະທົບທີ່ອາດເປັນໄປໄດ້ນັ້ນ ສາມາດຮູ້ໄດ້ ໃນຊ່ວງເວລາຈັດຕັ້ງປະຕິບັດໂຄງການ LAFF. ມັນເປັນລັກສະນະວິທີການຕົ້ນຕໍຂອງ ໂຄງການ LAFF ເຊິ່ງການປ່ອຍເງິນກູ້ຂະໜາດນ້ອຍໃຫ້ MSMEs ຈະສ້າງຄວາມສ່ຽງນ້ອຍຕໍ່ ESHS. ໂດຍອີງໃສ່ເຫດຜົນຄ້າຍຄືກັນນີ້, ສັນຍາໄລຍະ 2 (Separate Agreement II) ໄດ້ກຳນົດວ່າ ຖ້າເງິນກູ້ລາຍຍ່ອຍທັງໝົດຂອງໂຄງການ LAFF ຕໍ່າກວ່າ 500 ລ້ານກີບ, ໃຫ້ປະຕິບັດຕາມຂໍ້ກຳນົດ/ເງື່ອນໄຂມາດຖານ ESHS ໂດຍປະຕິບັດຢ່າງລະອຽດ ຕາມບັນຊີກິດຈະກຳສະເພາະຂະແໜງການ ທີ່ໂຄງການບໍ່ສະໜັບສະໜູນ.

11. ຄາດການວ່າ MSMEs ເຊິ່ງໄດ້ຮັບຜົນປະໂຫຍດ ຈະກ່ຽວຂ້ອງກັບທຸລະກິດ/ກິດຈະກຳຕ່າງໆ, ບາງທຸລະກິດອາດມີຄວາມສ່ຽງ ແລະ ຜົນກະທົບບໍ່ດີຕໍ່ສິ່ງແວດລ້ອມ ແລະ ສັງຄົມ. ແຕ່ຜົນກະທົບບໍ່ດີນັ້ນ ຈະມີສະເພາະທ້ອງຖິ່ນ, ສາມາດເຮັດໃຫ້ກັບຄືນສູ່ສະພາບເດີມໄດ້ ແລະ ສາມາດບັນເທົາຜົນກະທົບໄດ້ ໂດຍຜ່ານການກັ່ນກອງ/ປະເມີນຜົນກະທົບສິ່ງແວດລ້ອມ ແລະ ສັງຄົມ ອັນເໝາະສົມຖືກຕ້ອງ (ເບິ່ງເອກະສານຊ້ອນທ້າຍ 9)

12. ໂຄງການ LAFF ບໍ່ມີເງິນກູ້ ຫຼື ທຸລະກິດ ທີ່ໄປກ່ຽວຂ້ອງກັບການເວນຄືນທີ່ດິນ ຫຼື ປ່ຽນແປງການນຳໃຊ້ທີ່ດິນ, ວຽກງານກໍ່ສ້າງ, ກຸ່ມຊົນເຜົ່າໃນຂອບເຂດໂຄງການ LAFF. ກອບນະໂຍບາຍນີ້ ເນັ້ນໜັກໃສ່ແຕ່ ຄວາມສ່ຽງປະເພດ “B” (ຄວາມສ່ຽງປານກາງ) ຫຼື “C” (ຄວາມສ່ຽງຕໍ່າ) ເຊິ່ງຖືກຕ້ອງສອດຄ່ອງກັບຂໍ້ແນະນຳຂອງ KfW ວ່າດ້ວຍຄວາມຍືນຍົງ (ເບິ່ງເອກະສານຊ້ອນທ້າຍ 7).

## 1.6 ຈຸດປະສົງຂອງການກັ່ນກອງ ແລະ ປະເມີນສິ່ງແວດລ້ອມ ແລະ ສັງຄົມ ຂອງທຸລະກິດ/ເງິນກູ້ ທີ່ສະເໜີ

13. ຈຸດປະສົງ, ມີຄື: (i) ກັ່ນກອງ/ປະເມີນເງິນກູ້ລາຍຍ່ອຍ ເພື່ອໃຫ້ຖືກຕ້ອງສອດຄ່ອງກັບເງື່ອນໄຂ; (ii) ປະເມີນບັນຫາສິ່ງແວດລ້ອມ ແລະ ສັງຄົມ; (iii) ຕັດສິນຂໍ້ກຳນົດ/ເງື່ອນໄຂດ້ານສິ່ງແວດລ້ອມ ແລະ ສັງຄົມ ທີ່ຈະບັງຄັບໃຊ້; (iv) ກຳນົດປະເພດສິ່ງແວດລ້ອມຂອງທຸລະກິດ/ເງິນກູ້ ໂດຍອີງໃສ່ຄວາມສ່ຽງ ແລະ ຜົນກະທົບທີ່ອາດເກີດຂຶ້ນໄດ້, (v) ວາງແຜນ/ກຳນົດເຄື່ອງມືສະເພາະ (ຖ້າຈຳເປັນ) ເພື່ອແກ້ໄຂຜົນກະທົບສິ່ງແວດລ້ອມ ແລະ ສັງຄົມ. ຕ້ອງດຳເນີນຂະບວນການ/ຂັ້ນຕອນປະເມີນສິ່ງແວດລ້ອມ ແລະ ສັງຄົມ ສຳລັບທຸກເງິນກູ້ລາຍຍ່ອຍ/ທຸລະກິດ ທີ່ສະເໜີຂໍທຶນ ພາຍໃຕ້ໂຄງການ LAFF ຕາມຂະບວນການ/ຂັ້ນຕອນສຳຄັນດັ່ງລຸ່ມນີ້:

(1) ກັ່ນກອງ/ປະເມີນ: ຖ້າວ່າ ທຸລະກິດ/ກິດຈະກຳ ທີ່ສະເໜີ ອາດຈະພາໃຫ້ເກີດຜົນກະທົບສິ່ງແວດລ້ອມ ຫຼື ສັງຄົມ ແລະ ກະທົບກຸ່ມຊົນເຜົ່າ - ຜົນກະທົບ ທີ່ຈະຕາມມາແມ່ນຫຍັງ?
(2) ຂອບເຂດ: ບັນຫາສຳຄັນຂອງການປະເມີນແມ່ນຫຍັງ? ຂອບເຂດຜົນກະທົບ/ຜົນສະທ້ອນຂອງໂຄງການຄືແນວໃດ? ຜົນກະທົບອາດເກີດຂຶ້ນໃນບາດກ້າວໃດຂອງໂຄງການ? ມີປະຊາຊົນ ຫຼື ຊຸມຊົນທ້ອງຖິ່ນ ເຊິ່ງອາດຖືກໂຄງການກະທົບໂດຍກົງ, ສະນັ້ນຄວນພະຈາລະນາຄວາມຄິດເຫັນ ແລະ ຄວາມກັງວົນໃຈຂອງໃຜ- ຢູ່ໃນການອອກແບບ ແລະ ຈັດຕັ້ງປະຕິບັດທຸລະກິດ/ກິດຈະກຳ?
(3) ການປະເມີນ ແລະ ສ້າງ/ພັດທະນາ ມາດຕະການບັນເທົາຜົນກະທົບ: ວິເຄາະຂອບເຂດ ແລະ ລັກສະນະຂອງຜົນກະທົບ, ຕ້ອງໄດ້ຮັບອະນຸຍາດ, ຄວາມຄິດເຫັນຂອງສາທາລະນະຊົນຕໍ່ຜົນກະທົບ, ສ້າງ/ພັດທະນາມາດຕະການ ເພື່ອຫຼີກເວັ້ນ ຫຼື ບັນເທົາຜົນກະທົບເຫຼົ່ານັ້ນ, ສ້າງກົນໄກກວດກາຄວາມສ່ຽງເຫຼົ່ານັ້ນຈະຖືກຄຸ້ມຄອງແນວໃດ.

(4) ປຶກສາຫາລື ແລະ ເຜີຍແຜ່/ເປີດເຜີຍຂໍ້ມູນ: ແລກປ່ຽນຂໍ້ມູນກ່ຽວກັບໂຄງການ ແລະ ຜົນກະທົບຂອງໂຄງການ ທີ່ອາດຈະກະທົບໂດຍກົງຕໍ່ປະຊາຊົນຖືກກະທົບ, ຊຸມຊົນທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງອື່ນໆ, ຊອກຫາຄວາມຄິດເຫັນ ແລະ ຄວາມກັງວົນໃຈຂອງເຂົາເຈົ້າ ກ່ຽວກັບການອອກແບບ ແລະ ຈັດຕັ້ງປະຕິບັດໂຄງການ.

### 1.7 ກະກຽມການຈັດຕັ້ງປະຕິບັດ

14. ທະນາຄານແຫ່ງຊາດ ສປປ ລາວ (BoL) ເປັນອົງການບໍລິຫານຄຸ້ມຄອງໂຄງການ (PEA), PEA/LAFF ຕ້ອງຮັບປະກັນວ່າ ມີແຕ່ເງິນກູ້ລາຍຍ່ອຍ ຫຼື ທຸລະກິດ ທີ່ບໍ່ມີຄວາມສ່ຽງດ້ານສິ່ງແວດລ້ອມ ແລະ ສັງຄົມ ເທົ່ານັ້ນ ຈະໄດ້ຮັບທຶນ ແລະ PEA/LAFF ຈະຮັບຜິດຊອບການຈັດຕັ້ງປະຕິບັດກອບນະໂຍບາຍສະບັບນີ້. ເຖິງແມ່ນວ່າ ການຈັດຕັ້ງປະຕິບັດ Framework ປົກກະຕິ (ລາຍວັນ) ແມ່ນຖືກມອບໝາຍໃຫ້ PFIs ແລະ ບົດບາດສຳຄັນຂອງ PEA/LAFF ຈະກວດກາຄວາມຖືກຕ້ອງ ແລະ ລາຍງານເຖິງ KfW, ແຕ່ຄວາມຮັບຜິດຊອບທັງໝົດກໍຍັງເປັນຂອງ PEA/LAFF ເພື່ອຮັບປະກັນວ່າ PFIs ແລະ MSMEs ຈັດຕັ້ງປະຕິບັດທຸລະກິດ ຫຼື ເງິນກູ້ລາຍຍ່ອຍ ຖືກຕ້ອງສອດຄ່ອງກັບ ກອບນະໂຍບາຍສະບັບນີ້ Framework.

15. PFIs ຈະບໍລິຫານ/ປ່ອຍເງິນກູ້ໃຫ້ MSMEs ເພື່ອລົງທຶນໃນທຸກລະກິດຂອງຕົນ ເຊິ່ງຖືກຕ້ອງຕາມເງື່ອນໄຂ. ສະນັ້ນ, PFIs ຈະຕ້ອງຮັບຜິດຊອບກັ່ນກອງ/ປະເມີນທຸລະກິດ/ເງິນກູ້ລາຍຍ່ອຍ ເຊິ່ງຖືກຕ້ອງຕາມເງື່ອນໄຂ ພາຍໃຕ້ໂຄງການ LAFF ໂດຍທຽບກັບບັນຊີກິດຈະກຳທີ່ໂຄງການບໍ່ໃຫ້ທຶນ (ເບິ່ງເອກະສານຊ້ອນທ້າຍ 1); ກັ່ນກອງ/ປະເມີນທຸລະກິດ/ເງິນກູ້ ເພື່ອຕັດສິນຜົນກະທົບ ແລະ ບັນຫາສິ່ງແວດລ້ອມ ແລະ ສັງຄົມ, ກົດໝາຍ/ລະບຽບຫຼັກການ ທີ່ກ່ຽວຂ້ອງ ແລະ ວາງມາດຕະການທີ່ຈຳເປັນ ເພື່ອຄຸ້ມຄອງຜົນກະທົບເຫຼົ່ານີ້. ນອກຈາກນີ້, PFIs ຍັງຈະຕ້ອງກວດກາການຈັດຕັ້ງປະຕິບັດບັນດາມາດຕະການ ທີ່ MSMEs ໄດ້ສັນຍາ ແລະ ລາຍງານປົກກະຕິເຖິງ PEA/LAFF.

PFIs ຈະຕ້ອງຮັບຜິດຊອບສະເພາະ:

(1) ປະຕິບັດງານໃຫ້ຖືກຕ້ອງກັບ Framework ແລະ ບັນຊີ (ເບິ່ງເອກະສານຊ້ອນທ້າຍ 1) ພາຍໃຕ້ໂຄງການ LAFF
(2) ດຳເນີນມາດຕະການ ທີ່ເຫັນວ່າຈຳເປັນ, ລວມທັງລົງກວດກາສະຖານທີ່ ເພື່ອພິສູດວ່າ ຜູ້ຮ້ອງຂໍກູ້ຢືມເງິນ/MSME ໄດ້ລະບຸຄວາມສ່ຽງດ້ານສິ່ງແວດລ້ອມ-ສັງຄົມ ຖືກຕ້ອງເໝາະສົມ ແລະ ມາດຕະການອັນຈຳເປັນ ເພື່ອຄຸ້ມຄອງການຈັດຕັ້ງປະຕິບັດເງິນກູ້ຢືມຂອງເຂົາເຈົ້າ.
(3) ຮັບປະກັນວ່າ ທຸລະກິດ ຫຼື ກິດຈະກຳ ທີ່ສະເໜີ ເຊິ່ງເງິນກູ້ຢືມກວມເອົານັ້ນ ຖືກຕ້ອງກັບກົດໝາຍລັດ ແລະ ລະບຽບຫຼັກການສິ່ງແວດລ້ອມ ທັງໝົດ. ຖ້າວ່າ ຜູ້ຮ້ອງຂໍກູ້ຢືມເງິນຄົນໃດໜຶ່ງຍັງບໍ່ໄດ້ໃບອະນຸຍາດ, PFIs ຕ້ອງແນະນຳຜູ້ຮ້ອງຂໍເງິນກູ້ ໄປເອົາໃບອານຸຍາດກ່ອນ ຈຶ່ງສາມາດອານຸມັດເງິນກູ້. ໃນຊ່ວງກວດກາ, PFIs ແລະ LAFF ຕ້ອງຮັບປະກັນວ່າ ທຸລະກິດທັງໝົດຂອງຜູ້ປະກອບການ MSME ຖືກຕ້ອງສອດຄ່ອງກັບລະບຽບຫຼັກການຂອງລັດ.
(4) ສ້າງ/ພັດທະນາ ແລະ ຮັກສາກົນໄກການຮ້ອງທຸກ ດັ່ງທີ່ໄດ້ກຳນົດໄວ້ໃນກອບນະໂຍບາຍສະບັບນີ້ ເພື່ອຮັບປະກັນວ່າ ການຮ້ອງທຸກຕໍ່ທຸລະກິດ ທີ່ໂຄງການ ສະໜັບສະໜູນ ມີສະຖານທີ່ໃຫ້ແກ້ໄຂ
(5) ຖ້າວ່າມີບັນຫາ/ເຫດການ/ອຸປະຕິເຫດອັນຮ້າຍແຮງ (ສັງຄົມ, ແຮງງານ, ສຸຂະພາບ, ຄວາມປອດໄພ, ສິ່ງແວດລ້ອມ, ອື່ນໆ) ທີ່ກ່ຽວຂ້ອງກັບທຸລະກິດ/ກິດຈະກຳ ເຊິ່ງໂຄງການ LAFF ປ່ອຍເງິນກູ້ກວມເອົາ ຈຶ່ງແຈ້ງເຖິງໂຄງການພາຍໃນເວລາທາງລັດຖະການອັນເໝາະສົມ ນັບແຕ່ມື້ຮູ້ເຫດການ
(6) ຮັບປະກັນວ່າ MSMEs ຈະຮັບຜິດຊອບທຸລະກິດຂອງຕົນ ໃຫ້ຖືກຕ້ອງຕາມເງື່ອນໄຂການຂໍຮ້ອງເງິນກູ້ (ເບິ່ງ ຂໍ້ 2.3.4 Separate Agreement), ຄຸ້ມຄອງຜົນກະທົບສິ່ງແວດລ້ອມ ແລະ ສັງຄົມ ຕະຫຼອດເວລາກະກຽມ ແລະ ຈັດຕັ້ງປະຕິບັດມາດຕະການບັນເທົາຜົນກະທົບ.

# 2 ຂະບວນການ/ຂັ້ນຕອນກັ່ນກອງ/ປະເມີນສິ່ງແວດລ້ອມ ແລະ ສັງຄົມ

### 2.1 ການຮ້ອງຂໍກູ້ຢືມເງິນ

16. ເງິນກູ້/ທຸລະກິດ ຕ້ອງຖືກກັບກົດໝາຍ, ລະບຽບຫຼັກການ ແລະ ເງື່ອນໄຂ (ເບິ່ງເອກະສານຊ້ອນທ້າຍ 11) ເຊິ່ງໄດ້ກຳນົດໄວ້ໃນກອບນະໂຍບາຍສະບັບນີ້ Framework ແລະ ໃຫ້ຖືກຕ້ອງສອດຄ່ອງກັບ ມາດຕາ 2.2 ຂອງສັນຍາ Separate Agreement. MSMEs ທີ່ຮ້ອງຂໍກູ້ຢືມເງິນຕ້ອງສະເໜີລາຍລະອຽດຫຍໍ້ຂອງທຸລະກິດຕໍ່ PFIs ແລະ ຜູ້ຮ້ອງຂໍກູ້ຢືມ ຕ້ອງຄິດວ່າມັນຈະເປັນແນວໃດ ຕໍ່ກັບບັນຫາ ແລະ ຄວາມສ່ຽງດ້ານສິ່ງແວດລ້ອມ-ສັງຄົມ ທີ່ກ່ຽວຂ້ອງກັບທຸລະກິດ. PFIs ຈະນຳໃຊ້ຂໍ້ມູນນີ້ດຳເນີນຂະບວນການກັ່ນກອງ/ປະເມີນ ແລະ ຈັດປະເພດຜົນກະທົບ (ເບິ່ງເອກະສານຊ້ອນທ້າຍ 9)

### 2.2 ກັ່ນກອງ/ປະເມີນ ແລະ ຈັດປະເພດຄວາມສ່ຽງສິ່ງແວດລ້ອມ ແລະ ສັງຄົມ

17. PFI ຈະຈັດປະເພດຄວາມສ່ຽງສິ່ງແວດລ້ອມ ແລະ ສັງຄົມ ຂອງທຸລະກິດທີ່ສະເໜີຂໍກູ້ຢືມເງິນ ໃຫ້ຖືກຕ້ອງສອດຄ່ອງກັບ Framework. ທາງເລືອກຂອງການຈັດປະເພດຈະມີການພົວພັນເຊິ່ງກັນແລະກັນ (ເບິ່ງເອກະສານຊ້ອນທ້າຍ 7)

**2.2.1** ທຸລະກິດ ທີ່ໂຄງການບໍ່ສະໜັບສະໜູນເງິນກູ້ ພາຍໃຕ້ໂຄງການ **LAFF**

18. ທຸລະກິດ ທີ່ຊີ້ໃຫ້ເຫັນ ແລະ ຄາດການວ່າ ມີຜົນກະທົບແຮງ ແມ່ນບໍ່ໄດ້ຮັບເງິນກູ້ຢືມ ພາຍໃຕ້ໂຄງການ LAFF (ເບິ່ງເອກະສານຊ້ອນທ້າຍ 1: ບັນຊີ ທຸລະກິດ ຕ້ອງຫ້າມ ແລະ ຂໍ້ແນະນຳຂອງກຸ່ມ KfW)

## 2.3 ຫຼັກການ ແລະ ວິທີການກັ່ນກອງ/ປະເມີນຄວາມສ່ຽງ

19. ການກັ່ນກອງ/ປະເມີນຄວາມສ່ຽງ ແມ່ນຂັ້ນຕອນທຳອິດ ໃນຂະບວນການປະເມີນສິ່ງແວດລ້ອມ ເຊິ່ງຈະກຳນົດທຸລະກິດ/ເງິນກູ້ ທີ່ສະເໜີເຂົ້າໃນປະເພດໃດໜຶ່ງຂອງຈຳນວນ 4 ປະເພດ ຄື ປະເພດ "A" (ຄວາມສ່ຽງສູງ), "B+" (ຄວາມສ່ຽງແຮງ), "B" (ຄວາມສ່ຽງປານກາງ) ຫຼື "C" (ຄວາມສ່ຽງຕ່ຳ) (ເບິ່ງເອກະສານຊ້ອນທ້າຍ 7). ເນື່ອງຈາກວ່າ ລັກສະນະ ແລະ ຂະໜາດເງິນກູ້ ຫຼື ມີທຶນຈຳກັດໃຫ້ແກ່ MSMEs, ກອບນະໂຍບາຍສະບັບນີ້ ຈຶ່ງເນັ້ນໜັກໃສ່ແຕ່ ຄວາມສ່ຽງປະເພດ "B" (ຄວາມສ່ຽງປານກາງ) ຫຼື "C" (ຄວາມສ່ຽງຕ່ຳ). ການຈັດປະເພດນີ້ ຈະຕັດສິນລັກສະນະຂອງການປະເມີນສິ່ງແວດລ້ອມ-ສັງຄົມ ແລະ ຈະລະບຸທຸລະກິດ/ເງິນກູ້ ທີ່ຈະຖືກຕັດອອກໃນບາດກ້າວທຳອິດ ເຊິ່ງຖືກຕ້ອງຕາມ ບັນຊີທຸລະກິດ/ກິດຈະກຳ ຕ້ອງຫ້າມ (ເບິ່ງເອກະສານຊ້ອນທ້າຍ 1).

20. ໂຄງການ LAFF ມີຈຸດປະສົງສະໜັບສະໜູນທຸລະກິດ/ກິດຈະກຳ/ໂຄງການ ທີ່ຈະປ້ອງກັນຜົນກະທົບບໍ່ດີ ແລະ ອັນຕະລາຍຕໍ່ຊຸມຊົນທ້ອງຖິ່ນ ແລະ ສິ່ງແວດລ້ອມ. ຜົນກະທົບໃດໜຶ່ງ ສາມາດຖືກແກ້ໄຂໃຫ້ຖືກຕ້ອງກັບກົດໝາຍລັດ, ຂໍ້ແນະນຳຂອງ KfW ແລະ ອົງການຈັດສາກົນອື່ນໆ ໃນເລື່ອງປົກປ້ອງສິ່ງແວດລ້ອມ, ສັງຄົມ, ສຸຂະພາບ ແລະ ຄວາມປອດໄພ (ເຊັ່ນຂໍ້ແນະນຳຂອງ ອົງການແຮງງານສາກົນ, ອົງການກອງທຶນສາກົນ, ກົດໝາຍແຮງງານແຫ່ງຊາດ) ດັ່ງທີ່ໄດ້ລະບຸໄວ້ໃນນີ້ Framework. ຕາຕະລາງ ແລະ ແຜນຜັງຢູ່ຂ້າງລຸ່ມນີ້ ໄດ້ສັງລວມ ແລະ ສະແດງໃຫ້ເຫັນ ຂະບວນການ/ຂັ້ນຕອນການກັ່ນກອງ/ປະເມີນຜົນກະທົບຂອງທຸລະກິດ ຫຼືໂຄງການຍ່ອຍໃດໜຶ່ງ.

**ຕາຕະລາງ 1: ຂະບວນການ/ຂັ້ນຕອນກັ່ນກອງ/ປະເມີນຜົນກະທົບສິ່ງແວດລ້ອມ ແລະ ສັງຄົມຂອງທຸລະກິດ/ເງິນກູ້**

| ຂັ້ນຕອນ | ການດຳເນີນງານ | ຄວາມຮັບຜິດຊອບ | ເຄື່ອງມື | ເງື່ອນໄຂ/ຜົນຮັບ |
|---|---|---|---|---|
| • ຂັ້ນຕອນ 1 | • MSME ສະເໜີຂໍກູ້ຢືມ<br>• PFI ຮັບຊາບ ແລະ ກວດທຽບທຸລະກິດໃສ່ບັນຊີຕ້ອງຫ້າມ | MSME/PFI | • ບັນຊີຕ້ອງຫ້າມ (ເອກະສານຊ້ອນທ້າຍ 1)<br>• ໃຊ້ແບບຟອມປະເມີນຜົນກະທົບ E&S (ເອກະສານຊ້ອນທ້າຍ 9) | **ເງື່ອນໄຂ:**<br>• ທຸລະກິດທັງໝົດຕ້ອງຖືກກວດທຽບບັນຊີຕ້ອງຫ້າມ ແລະ ປະເມີນ E&S. ຊ້ອນແບບຟອມປະເມີນ E&S ກັບຄຳຮ້ອງຂໍກູ້ຢືມ<br>• ຖ້າທຸລະກິດບໍ່ຖືກກັບເງື່ອນໄຂ, ໃຫ້ຢຸດ.<br>**ຜົນຮັບ:**<br>• ສຳເລັດການປະເມີນE&S ແລະ ຢັ້ງຢືນປະເພດຜົນກະທົບ C (ເບິ່ງເອກະສານຊ້ອນທ້າຍ 9) |
| • ຂັ້ນຕອນ2 | • ຖ້າວ່າທຸລະກິດອາດຈະມີຄວາມສ່ຽງປານກາງ (ພາຍຫຼັງໄດ້ລາຍລະອຽດ MSMEs)<br>• ພະນັກງານສິນເຊື່ອແນະນຳມາດຕະການບັນເທົາຜົນກະທົບ E&S (ຖ້າຈຳເປັນ-ອາດລົງກວດກາສະໜາມ) | ພະນັກງານສິນເຊື່ອຂອງPFI | • ແບບອມປະເມີນ E&S | **ຜົນຮັບ**<br>• ສຳເລັດແບບຟອມE&S, ໃຫ້ຄຳແນະນຳກ່ຽວກັບການບັນເທົາຜົນກະທົບ |

**ຕາຕະລາງ 2: ແຜນຜັງຂັ້ນຕອນ/ຂະບວນການປະເມີນຜົນກະທົບ E&S**




## 2.4 ຫຼັກການ ແລະ ວິທີການຈັດປະເພດຜົນກະທົບ

21. ດັ່ງທີ່ກ່າວມາ, ລັກສະນະ, ຂະໜາດເງິນກູ້ ແລະ ທຶນຈຳກັດໃຫ້ແກ່ MSMEs ແມ່ນໜ້ອຍ (500 ລ້ານກີບ). ກິດຈະກຳຂອງໂຄງການ LAFF ຈະບໍ່ກ່ຽວຂ້ອງກັບການເວນຄືນທີ່ດິນ, ວຽກກໍ່ສ້າງ ແລະ ກຸ່ມຊົນເຜົ່າ. ສະນັ້ນ ກອບນະໂຍບາຍນີ້ Framework ຈຶ່ງເນັ້ນໜັກໃສ່ແຕ່ ຄວາມສ່ຽງປະເພດ "B" (ຄວາມສ່ຽງປານກາງ) ຫຼື "C" (ຄວາມສ່ຽງຕ່ຳ)

**ທຸລະກິດ ທີ່ຈັດເປັນປະເພດ C**

22. ທຸລະກິດ ທີ່ບໍ່ມີລັກສະນະ ຄືຂອງປະເພດ A ແລະ B ແມ່ນປະເພດ C (ເບິ່ງເອກະສານຊ້ອນທ້າຍ 7).

## 2.5 ບັນຊີທຸລະກິດ ທີ່ໂຄງການບໍ່ສະໜັບສະໜູນທຶນ

23. ທຸລະກິດ ທີ່ບໍ່ໄດ້ຮັບການສະໜັບສະໜູນທຶນ ແມ່ນທຸລະກິດເຊິ່ງມີຜົນກະທົບຮ້າຍແຮງ (ເບິ່ງເອກະສານຊ້ອນທ້າຍ 1)

# 3 ການປະເມີນ ແລະ ທົບທວນຄືນ (ກວດກາ) ສິ່ງແວດລ້ອມ ແລະ ສັງຄົມ

## 3.1 ການປະເມີນ ແລະ ທົບທວນຄືນ ສິ່ງແວດລ້ອມ ແລະ ສັງຄົມ ສຳລັບທຸລະກິດຈັດເປັນປະເພດ C

24. ໂດຍຜ່ານຂະບວນການ/ຂັ້ນຕອນກັ່ນກອງ/ປະເມີນຜົນກະທົບ ແລະ ຄວາມສ່ຽງສິ່ງແວດລ້ອມ ແລະ ສັງຄົມ, ຖ້າເຫັນວ່າຜົນກະທົບ ແລະ ຄວາມສ່ຽງ E&S ມີຕ່ຳ ຫຼື ໜ້ອຍ, ທຸລະກິດນັ້ນຖືກຈັດເປັນປະເພດ C ແລະ ບໍ່ຈຳເປັນປະເມີນ ແລະ ກວດກາຄືນເລື່ອງ E&S ໃນຕໍ່ໜ້າ. ແຕ່ຕ້ອງແນບແບບຟອມປະເມີນ/ຜົນການປະເມີນ E&S ໄປກັບເອກະສານສັນຍາ/ຄຳຮ້ອງຂໍກູ້ຢືມເງິນ. ນອກຈາກນີ້, PFIs ຕ້ອງຮັບປະກັນວ່າ ທຸລະກິດຖືກຕ້ອງກັບເງື່ອນໄຂລະບຽບຫຼັກການລັດ ລວມທັງໃບອະນຸຍາດ ແລະ ກວດກາການຈັດຕັ້ງປະຕິບັດທຸລະກິດນັ້ນ ເພື່ອແກ້ໄຂຜົນກະທົບ E&S ທີ່ອາດມີຜົນຕາມມາ.

## 3.2 ການປະເມີນ ແລະ ທົບທວນຄືນ ສິ່ງແວດລ້ອມ ແລະ ສັງຄົມ ສຳລັບທຸລະກິດຈັດເປັນປະເພດ B

25. ສຳລັບທຸລະກິດປະເພດ B+ ດັ່ງທີ່ໄດ້ບັນຍາຍໄວ້ໃນເອກະສານຊ້ອນທ້າຍ 7 ແມ່ນຖືກໂຈະ/ຢຸດ (ອີງຕາມບັນຊີຕ້ອງຫ້າມ ແລະ ຂໍ້ແນະນຳຂອງກຸ່ມ KfW). ສະນັ້ນ, ກອບນະໂຍບາຍນີ້ Framework ຈຶ່ງເນັ້ນໜັກໃສ່ແຕ່ ຄວາມສ່ຽງປະເພດ "B" (ຄວາມສ່ຽງປານກາງ) ຫຼື "C" (ຄວາມສ່ຽງຕ່ຳ).

### 3.3 ການຊ່ວຍເຫຼືອດ້ານເຕັກນິກ ແລະ ການສ້າງຄວາມສາມາດດ້ານປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ

26. ເຫັນວ່າ ການປັບປຸງຍົກລະດັບດ້ານປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ ຂອງ MSMEs ຈະມີປະສິດທິຜົນຍິ່ງຂຶ້ນ ໂດຍຜ່ານການສົ່ງເສີມຄວາມຮູ້ ແລະ ຄວາມເຂົ້າໃຈ ກ່ຽວກັບການປະຕິບັດຖືກຕ້ອງດີ ເຊິ່ງກ່ຽວຂ້ອງກັບການນຳໃຊ້ເຕັກໂນໂລຊີອັນເໝາະສົມ ແລະ ການຄຸ້ມຄອງສິ່ງເສດເຫຼືອ, ມີຫຼາຍຕົວຢ່າງດີໆ ພາຍໃນປະເທດ ແລະ ບັນດາປະເທດເພື່ອນບ້ານ ດັ່ງເຊັ່ນ ປະເທດໄທ ເຊິ່ງສາມາດນຳເອົາມາໃຊ້.

# 4 ການຕິດຕາມ ແລະ ກວດກາ

### 4.1 ການຕິດຕາມ ແລະ ກວດກາຜົນງານ ໂດຍ PFIs

27. ເຖິງແມ່ນວ່າ ຂະໜາດເງິນກູ້ໜ້ອຍ ທີ່ປ່ອຍໃຫ້ MSMEs ຈະສ້າງຄວາມສ່ຽງ/ຜົນກະທົບດ້ານ ESHS, PFIs ຕ້ອງຈັດຕັ້ງປະຕິບັດ ແລະ ກວດກາການຄຸ້ມຄອງຜົນກະທົບສິ່ງແວດລ້ອມ ແລະ ສັງຄົມ ໃນວິທີທາງຖືກຕ້ອງສອດຄ່ອງກັບ Framework ແລະ ລະບົບຄຸ້ມຄອງສິ່ງແວດລ້ອມ-ສັງຄົມ ESMS ຂອງ PFI (ເອກະສານຊ້ອນທ້າຍ 13: ຕົວວັດແທກ/ຊີ້ວັດ ESMS). ໃຫ້ PFIs ຊຸ່ມກວດ ເພື່ອພິສູດວ່າ ບໍ່ມີຜົນກະທົບ ແລະ ປະຕິບັດຖືກຕ້ອງກັບນິຕິກຳ, ລວມທັງໄດ້ຮັບອະນຸຍາດ.

28. ນອກຈາກນີ້, PFIs ຍັງຕ້ອງກັ່ນກອງສື່ສານສັງຄົມທີ່ເປັນລົບ/ອົງການ/ການລາຍງານ ກ່ຽວກັບບັນຫາສິ່ງແວດລ້ອມ ແລະ ສັງຄົມ ໂດຍເຮັດເປັນລາຍເດືອນ ແລະ ເກັບຮັກສາຂໍ້ມູນໃນສຳເນົາເອກະສານ.

29. PFIs ຕົກລົງເຮັດບົດລາຍງານການຕິດຕາມ ແລະ ກວດກາ ຕໍ່ກັບທຸລະກິດ ບົນພື້ນຖານເປັນຄວາມລັບ ສົ່ງເຖິງໂຄງການ LAFF (ເມື່ອມີການຮ້ອງຂໍ).

### 4.2 ການລາຍງານ

30. PFIs ຕ້ອງເຮັດບົດລາຍງານກ່ຽວກັບການດຳເນີນວຽກງານສິ່ງແວດລ້ອມ ແລະ ສັງຄົມ (E&S ) ສົ່ງເຖິງໂຄງການ LAFF (ເບິ່ງເອກະສານຊ້ອນທ້າຍ 12: ແບບຟອມ/ສັງລວມ ບົດລາຍງານການດຳເນີນວຽກງານສ E&S).

### 4.3 ກົນໄກຮັບຟັງການຮ້ອງທຸກ

31. ໂດຍຖືກຕ້ອງສອດຄ່ອງກັບສັນຍາ (Separate Agreement), ອົງການຈັດຕັ້ງປະຕິບັດໂຄງການ (PEA) ຕ້ອງສ້າງ ແລະ ຈັດຕັ້ງປະຕິບັດ ກົນໄກຮັບຟັງການຮ້ອງທຸກ (ເຊັ່ນ website) ເພື່ອຮັບຟັງການຮ້ອງທຸກ ແລະ ການຊອກຮູ້ທົ່ວໄປຂອງສັງຄົມ.

32. ພ້ອມນີ້ PFIs ຍັງຕ້ອງສ້າງ ແລະ ກຳນົດ ກົນໄກຮ້ອງທຸກ ເຊິ່ງ PFIs ຈະຮັບ ແລະ ແກ້ໄຂຄວາມຂັດຂ້ອງ ຫຼື ຄຳຮ້ອງທຸກ. ຖ້າວ່າ ຊຸມຊົນທ້ອງຖິ່ນ ຫຼື ພາກສ່ວນກ່ຽວຂ້ອງຖືກກະທົບໂດຍກົງເຂົ້າມາຫາ PFIs ພ້ອມທັງມີການທວງສິດຢ່າງມີເຫດຜົນ ແລະ ຄວາມຮັບຜິດຊອບວ່າ ທຸລະກິດໜຶ່ງ/ກິດຈະກຳໃດໜຶ່ງ ຂອງ MSME ທີ່ໃຊ້ເງິນກູ້ຢືມຈາກ PFI ໄດ້ສ້າງສິ່ງບໍ່ດີຕໍ່ເຂົາເຈົ້າ ຫຼື ຕໍ່ສິ່ງແວດລ້ອມ, PFIs ຕ້ອງດຳເນີນວຽກງານຮ່ວມກັບ MSME ທີ່ໄດ້ຮັບຜົນປະໂຫຍດນັ້ນ ແກ້ໄຂຄຳຮ້ອງທຸກ ໃນລັກສະນາຮັບຜິດຊອບ ແລະ ມີເຫດຜົນ.

33. MSME ທີ່ໄດ້ຮັບຜົນປະໂຫຍດ ຕ້ອງກຳນົດ, ບັນຍາຍຢ່າງຈະແຈ້ງກົນໄກຮັບຟັງການຮ້ອງທຸກ ໂດຍຜ່ານກົນໄກນັ້ນ ປະຊາຊົນ ຜູ້ເຊິ່ງອາດຖືກທຸກລະກິດ/ກິດຈະກຳ ກະທົບ ຈະສາມາດແຈ້ງ ພວກກ່ຽວ ໃນເລື່ອງຄຳຮ້ອງທຸກຂອງເຂົາເຈົ້າ.

## 5 ການປຶກສາຫາລື ແລະ ການເຜີຍແຜ່ກອບນະໂຍບາຍ

34. ທີ່ປຶກສາດ້ານສິ່ງແວດລ້ອມ ແລະ ສັງຄົມ ໄດ້ດຳເນີນການປຶກສາຫາລື (Online) ກ່ຽວກັບກອບນະໂຍບາຍ Framework ກັບຫ້ອງການບໍລິຫານໂຄງການ LMU, ທີ່ວຽງຈັນຄັ້ງວັນທີ 4 ສິງຫາ 2021.

**35.** ໃນຊ່ວງເວລາກະກຽມ Framework ໄດ້ມີການປະສານງານຢ່າງປົກກະຕິກັບ LAFF ແລະ AFC ເພື່ອຮັບເອົາການແນະນຳ ແລະ ຄຳສະເໜີ

**36.** ກອບນະໂຍບາຍສະບັບນີ້ Framework ຈະຖືກແປເປັນພາສາລາວ; ທັງສອງພາສາ (ສະບັບພາສາລາວ, ອັງກິດ) ຈະມີໄວ້ສຳລັບສັງຄົມ ຢູ່ທີ່ ຫ້ອງການ LAFF/PEA, ນະຄອນຫຼວງວຽງຈັນ.

# ເອກະສານຊ້ອນທ້າຍ

## ເອກະສານຊ້ອນທ້າຍ 1: ບັນຊີກິດຈະກຳທີ່ໂຄງການບໍ່ສະໜັບສະໜູນ ແລະ ຂໍ້ແນະນຳຂອງກຸ່ມ KfW

I ກິດຈະກຳ ທີ່ບໍ່ສະໜັບສະໜູນ
ບັນດາກິດຈະກຳ/ທຸລະກິດລຸ່ມນີ້, ກຸ່ມ KfW ບໍ່ສະໜັບສະໜູນທຶນໃຫ້ແກ່ໂຄງການໃໝ່ ຫຼື ບໍ່ມີຈຸດປະສົງສິ່ງເສີມ: *

1. ຜະລິດ ຫຼື ຄ້າ ຜະລິດຕະພັນ ທີ່ກົດໝາຍແຫ່ງຊາດ ຫຼື ກົດໝາຍສາກົນຫ້າມ ເຊັ່ນ:
   i) ຢາປົ່ນປົວ, ຢາຂ້າສັດຕູພືດ, ຢາຂ້າຫຍ້າ ແລະ ສານເຄມີອື່ນໆ (ຕາມສົນທິສັນຍາໂຣເຕີດາມ, ສະຕອກໂຮມ ແລະ ການຢາຂອງອົງການອານາໄມໂລກ WHO: ຫ້າມຄອບຄອງ ແລະ ນຳໃຊ້),
   ii) ສານທຳລາຍຊັ້ນໂອໂຊນ (ພາຍໃຕ້ຂໍ້ຕົກລົງ ມົງເຕຼອານ),
   iii) ສັດປ່າຄຸ້ມຄອງ ຫຼື ຜົນຜະລິດສັດປ່າ (ພາຍໃຕ້ສົນທິສັນຍາໄຊເຕສ/ວໍຊິງຕັນ CITES / Washington)
   iv) ການຄ້າສິ່ງເສດເຫຼືອຕ້ອງຫ້າມ ຂ້າມຊາຍແດນ (ພາຍໃຕ້ສົນທິສັນຍາ ບາເຊວ Basel).
2. ການລົງທຶນ ເຊິ່ງກ່ຽວຂ້ອງກັບ ການທຳລາຍ ** ຫຼື ເຮັດໃຫ້ພື້ນທີ່ເສຍຫາຍ ໂດຍສະເພາະຄຸນຄ່າຂອງການຮັກສາ (ບໍ່ມີການຊົດເຊີຍພຽງພໍ ຕາມມາດຖານສາກົນ).
3. ຜະລິດ ຫຼື ຄ້າ ອາວຸດ ຫຼື ອົງປະກອບອາວຸດ (ເຊັ່ນ ອາວຸດນິວເຄຼຍ, ອາວຸດລັງສີ, ອາວຸດຊີວະພາບ-ເຄມີທຳລາຍລ້າງ, ທຸ່ນລະເບີດ, ກັບລະເບີດ, ເສີມທາດຢູເຣນຽມ).
4. ຜະລິດ ຫຼື ຄ້າອຸປະກອນລັງສີ. ຂໍ້ຫ້າມນີ້ບໍ່ບັງຄັບໃຊ້ກັບການຊື້ອຸປະກອນການແພດ, ອຸປະກອນຄວບຄຸມຄຸນນະພາບ ຫຼື ອື່ນໆ ເຊິ່ງແຫຼ່ງລັງສີບໍ່ຮ້າຍແຮງ ຫຼື ມີຝາກັນລັງສີພຽງພໍ.
5. ຜະລິດ ຫຼື ຄ້າສານເຫຍື່ອຫີນ/ສານໄຍຫີນ (asbestos). ຂໍ້ຫ້າມນີ້ບໍ່ບັງຄັບໃຊ້ກັບ ການຊື້ ຫຼື ນຳໃຊ້ ວັດຖຸຊັບໃນຊີເມັນ ທີ່ມີສານໄຍຫີນ ແລະ ບັນຈຸສານໄຍຫີນໜ້ອຍກວ່າ 20%.
6. ການປະມົງ ຫຼື ຕາໜ່າງ/ມອງ ປະມົງທະເລ ທີ່ມີຄວາມຍາວກວ່າ 2.5 km.
7. ໂຮງງານໄຟຟ້າພະລັງງານນິວເຄຼຍ (ນອກຈາກບັນດາມາດຕະການ ເຊິ່ງລຸດຜ່ອນອັນຕະລາຍຕໍ່ສິ່ງແວດລ້ອມຊັບສິນທີ່ມີຢູ່)
8. ການຂຸດຄົ້ນ, ຄາດການ ແລະ ກິດຈະການເໝືອງຖ່ານຫີນ; ໂຄງລ່າງ-ການຄົມມະນາຄົມ ທີ່ໃຊ້ທີ່ດິນ ເຊິ່ງຈຳເປັນໃຫ້ແກ່ບໍ່ຖ່ານຫີນ, ເຂື່ອນໄຟຟ້າ, ໂຮງງານພະລັງງານຄວາມຮ້ອນ ທີ່ໃຊ້ຖ່ານຫີນ ແລະ ອື່ນໆ***
9. ການຂຸດຄົ້ນ, ກັ່ນກອງນ້ຳມັນຈາກຊັ້ນຫີນ, ຊາຍຫີນປູນ ຫຼື ຊາຍນ້ຳມັນ ໂດຍບໍ່ຖືກຕ້ອງຕາມສົນທິສັນຍາ.

II ຂໍ້ແນະນຳສະເພາະຂະແໜງການ

ໃນບັນດາຂະແໜງການທີ່ຄັດເລືອກ, ກຸ່ມ KfW ຍຶດໝັ້ນພັນທະສັນຍາການເງິນຂອງຕົນ ສຳລັບໂຄງການໃໝ່ຕາມເງື່ອນໄຂດັ່ງລຸ່ມນີ້: *

10. ຢູ່ນອກ ບັນດາປະເທດອີຢູ EU ແລະ ປະເທດມີລາຍຮັບສູງ ໃນ ອົງການເພື່ອການຮ່ວມມື-ພັດທະນາເສດຖະກິດ OECD, ບັນດາວິສະຫະກິດປ່າໄມ້ ຫຼື ກະສິກຳຂະໜາດໃຫຍ່ ເຊິ່ງຜະລິດນ້ຳມັນປາມ ຫຼື ໄມ້ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມລະບົບຢັ້ງຢືນຮັບຮອງມາດຖານສາກົນ (RSPO ຫຼື FSC) ຫຼື ລະບຽບຫຼັກການທຽບເທົ່າ ເພື່ອຮັບປະກັນເງື່ອນໄຂປູກຝັງຍືນຍົງ ຫຼື ຕ້ອງຢູ່ໃນຂະບວນການຖືກຕ້ອງສອດຄ່ອງກັບລະບຽບຫຼັກການ.

11. ໂຄງການເຂື່ອນໄຟຟ້າພະລັງນ້ຳ ແລະ ເຂື່ອນຂະໜາດໃຫຍ່ ນຳໃຊ້ຄຳແນະນຳຂອງຄະນະກຳມະການໂລກກ່ຽວກັບເຂື່ອນ (WCD) ຕາມນະໂຍບາຍ ****

12. ໂຄງການຂຸດຄົ້ນບໍ່ຖືກຕ້ອງຕາມສົນທິສັນຍາ ແລະ ການກັ່ນກອງແກັດຈະຕ້ອງເປີດເຜີຍໃຫ້ຖືກຕ້ອງສອດຄ່ອງກັບມາດຖານສາກົນ,
   - ຄາດການວ່າ ບໍ່ໃຫ້ເກີດມີນ້ຳໃຕ້ດິນບົກແຫ້ງ ຫຼື ປົນເປື້ອນສານພິດ,
   - ມີມາດຕະການປົກປ້ອງແຫຼ່ງທີ່ມາ (ໂດຍສະເພາະແມ່ນນ້ຳ) ແລະ ການໝູນວຽນກັບມາໃຊ້ໃໝ່,
   - ນຳໃຊ້ເຕັກໂນໂລຊີຖືກຕ້ອງເໝາະສົມ ເພື່ອການກັ່ນກອງປອດໄພ ລວມທັງທໍ່ບໍ່ຂຸດຄົ້ນ ແລະ ການທົດລອງຄວາມດັນ.

* ການອອກນອກກອບ (ບໍ່ເປັນໄປຕາມຫຼັກການ) ສາມາດເປັນເຫດມາຈາກທຸລະກິດສັ່ງການ (Zuweisungsgeschäft) ຖືກຕ້ອງຕາມ § 2 (4) ຂອງກົດໝາຍ ວ່າດ້ວຍ KfW, ຫຼື ຂໍ້ແນະນໍາຂອງກະຊວງກ່ຽວຂ້ອງ-ສະຫະພັນເຢຍລະມັນ.

** "ການທໍາລາຍ" ໝາຍຄວາມວ່າ (i) ການທໍາລາຍ ຫຼື ການເຊື່ອມໂຊມຮ້າຍແຮງຂອງພື້ນທີ່ທັງໝົດ ຍ້ອນການປ່ຽນແປງຂະໜາດກວ້າງໃຫຍ່ ແລະ ຍາວນານໃນການນໍາໃຊ້ທີ່ດິນ ຫຼື ນໍ້າ (ii) ປັບປ່ຽນຖິ່ນທີ່ຢູ່ທາງທໍາມະຊາດຂອງສັດ-ພືດ ເຊິ່ງນໍາໄປສູ່ຄວາມບໍ່ໝັ້ນທ່ຽງຂອງພື້ນທີ່ຖືກກະທົບ ເຊິ່ງຈະເປັນໄປຕາມການທໍາງານຂອງມັນເອງ.

*** ການລົງທຶນໃນຕາໜ່າງສາຍສົ່ງໄຟຟ້າ ທີ່ມີການສະໜອງພະລັງງານດ້ວຍຖ່ານຫີນ ເຊິ່ງຈະດໍາເນີນໃນບັນດາປະເທດ ແລະ ຂົງເຂດ ຕາມຍຸດທະສາດ ຫຼື ນະໂຍບາຍປົກປ້ອງດິນຟ້າອາກາດແຫ່ງຊາດ (NDC), ຫຼື ໃນເຂດມີການລວມກັນເພື່ອລຸດຜ່ອນບັນຫາດິນຟ້າອາກາດ ດ້ວຍການແລກປ່ຽນຕາໜ່າງສາຍສົ່ງໄຟຟ້າທີ່ອີງໃສ່ຖ່ານຫີນ.

ໃນບັນດາປະເທດກໍາລັງພັດທະນາ, ສິ່ງອໍານວຍຄວາມສະດວກ (CHP) ແລະ ໂຮງງານພະລັງຄວາມຮ້ອນ ທີ່ໃຊ້ຖ່ານຫີນ ສາມາດໃຫ້ທຶນຮ່ວມກັນ ໄປແຕ່ລະກໍລະນີ ໂດຍອີງໃສ່ການປະເມີນ, ຖ້າວ່າມີການປະກອບສ່ວນຜົນປະໂຫຍດສູງ, ລຸດຜ່ອນບັນຫາສິ່ງແວດລ້ອມ ແລະ ຖ້າສະແດງໃຫ້ເຫັນການປັບປ່ຽນນັ້ນ ເປັນມິດກັບທໍາມະຊາດ.

**** ເຂື່ອນ ທີ່ມີຄວາມສູງຢ່າງໜ້ອຍ 15 m ວັດແທກແຕ່ພື້ນຖານ ຫຼື ເຂື່ອນທີ່ມີຄວາມສູງ ລະຫວ່າງ 5 ແລະ 15 m ທີ່ມີອ່າງຮັບບັນຈຸນໍ້າໄດ້ຫຼາຍກວ່າ 3 ລ້ານແມັດກ້ອນ.

## ເອກະສານຊ້ອນທ້າຍ 2: ມາດຖານການປົກປ້ອງ E&S ຂອງ IFC

IFC ໄດ້ສ້າງມາດຖານການດຳເນີນງານປົກປ້ອງ 8 ມາດຖານ ເຊິ່ງກວມເອົາຂະໜາດກວ້າງຂວາງຂອງການປົກປ້ອງ ແລະ ຍັງຖືວ່າ 8 ມາດຖານນີ້ແມ່ນພາກສ່ວນໜຶ່ງຂອງຫຼັກການສະເໜີພາບ. ທ່ານສາມາດເຂົ້າເຖິງ 8 ມາດຖານການປົກປ້ອງ ໄດ້ໂດຍທາງ: (www.ifc.org/ifcext/sustainability.nsf/Content/EnvSocStandards).

1. ມາດຖານການດຳເນີນງານປົກປ້ອງ 1: ລະບົບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ
2. ມາດຖານການດຳເນີນງານປົກປ້ອງ 2: ເງື່ອນໄຂ/ສະພາບແວດລ້ອມຂອງການເຮັດວຽກ ແລະ ອອກແຮງງານ
3. ມາດຖານການດຳເນີນງານປົກປ້ອງ 3: ຫຼຸດຜ່ອນ ແລະ ປ້ອງກັນມົນລະພິດ
4. ມາດຖານການດຳເນີນງານປົກປ້ອງ 4: ສຸຂະພາບຊຸມຊົນ, ຄວາມປອດໄພ ແລະ ການປ້ອງກັນ
5. ມາດຖານການດຳເນີນງານປົກປ້ອງ 5: ການຄອບຄອງ/ເວນຄືນທີ່ດິນ ແລະ ການຍົກຍ້າຍແບບບໍ່ສະມັກໃຈ
6. ມາດຖານການດຳເນີນງານປົກປ້ອງ 6: ຄຸ້ມຄອງຊັບພະຍາກອນທຳມະຊາດຍືນຍົງ ແລະ ອານຸລັກຊີວະນາໆພັນ
7. ມາດຖານການດຳເນີນງານປົກປ້ອງ 7: ປະຊາຊົນດັ້ງເດີມ
8. ມາດຖານການດຳເນີນງານປົກປ້ອງ 8: ມໍລະດົກທາງວັດທະນາທຳ

ກຸ່ມທະນາຄານໂລກ WBG ມີ ມາດຖານສິ່ງແວດລ້ອມ ແລະ ສັງຄົມ 10 ມາດຖານ (ESS) ເຊິ່ງທັງໝົດ ຄ້າຍຄືກັນ, ກວມເອົາ ມາດຖານການດຳເນີນງານປົກປ້ອງຂອງ IFC:

1. ມາດຖານສິ່ງແວດລ້ອມ ແລະ ສັງຄົມ 1. ປະເມີນ ແລະ ຄຸ້ມຄອງຄວາມສ່ຽງ ແລະ ຜົນກະທົບສິ່ງແວດລ້ອມ ແລະ ສັງຄົມ
2. ມາດຖານສິ່ງແວດລ້ອມ ແລະ ສັງຄົມ 2. ເງື່ອນໄຂ/ສະພາບແວດລ້ອມຂອງການເຮັດວຽກ ແລະ ອອກແຮງງານ
3. ມາດຖານສິ່ງແວດລ້ອມ ແລະ ສັງຄົມ 3. ຄຸ້ມຄອງ ແລະ ປ້ອງກັນ ມົນລະພິດ ແລະ ປະສິດທິຜົນຊັບພະຍາກອນ
4. ມາດຖານສິ່ງແວດລ້ອມ ແລະ ສັງຄົມ 4. ຄວາມປອດໄພ ແລະ ສຸຂະພາບຂອງຊຸມຊົນ
5. ມາດຖານສິ່ງແວດລ້ອມ ແລະ ສັງຄົມ 5. ການຄອບຄອງ/ເວນຄືນທີ່ດິນ, ການຫ້າມນຳໃຊ້ທີ່ດິນ ແລະ ການຍົກຍ້າຍແບບບໍ່ສະມັກໃຈ
6. ມາດຖານສິ່ງແວດລ້ອມ ແລະ ສັງຄົມ 6. ອານຸລັກຊີວະນາໆພັນ ແລະ ຄຸ້ມຄອງຊັບພະຍາກອນທຳມະຊາດ-ສິ່ງມີຊີວິດໃຫ້ຍືນຍົງ
7. ມາດຖານສິ່ງແວດລ້ອມ ແລະ ສັງຄົມ 7. ປະຊາຊົນດັ້ງເດີມ/ຊຸມຊົນທ້ອງຖິ່ນຊາຮາຣາ ອາຟຼິກກາ
8. ມາດຖານສິ່ງແວດລ້ອມ ແລະ ສັງຄົມ 8. ມໍລະດົກທາງວັດທະນາທຳ
9. ມາດຖານສິ່ງແວດລ້ອມ ແລະ ສັງຄົມ 9. ສື່ກາງທາງການເງິນ (ສະຖາບັນການເງິນ)
10. ມາດຖານສິ່ງແວດລ້ອມ ແລະ ສັງຄົມ 10. ການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ ແລະ ການເປີດເຜີຍຂໍ້ມູນ.

ໃນບັນດາມາດຖານສິ່ງແວດລ້ອມ ແລະ ສັງຄົມເຫຼົ່ານີ້, ມີພຽງ ມາດຖານສິ່ງແວດລ້ອມ ແລະ ສັງຄົມ 2 ແລະ 9 ຖືກນຳໃຊ້ກັບ ໂຄງການ LAFF. ທ່ານສາມາດຄົ້ນເຫັນ ESS ຢູ່ໃນເວບໄຊ ຂອງທະນາຄານໂລກ World Bank website: (www.worldbank.org/esf).

**ເອກະສານຊ້ອນທ້າຍ 3: ມາດຖານສິ່ງແວດລ້ອມ ແລະ ສັງຄົມ 2 & 9 ຂອງ WB**

ມາດຖານສິ່ງແວດລ້ອມ ແລະ ສັງຄົມ 2 ຂອງ **WB ESS 2: ເງື່ອນໄຂທີ່ຈຳເປັນ**

ກ. ເງື່ອນໄຂຂອງການເຮັດວຽກ ແລະ ການຄຸ້ມຄອງສາຍພົວພັນແຮງງານ

- ຂອບເຂດໜ້າວຽກ ແລະ ເງື່ອນໄຂຈ້າງງານ
- ບໍ່ເລືອກປະຕິບັດ ແລະ ມີໂອກາດເທົ່າທຽມກັນ
- ອົງການຈັດຕັ້ງກຳມະກອນ

ຂ. ປົກປ້ອງກຳລັງແຮງງານ

- ແຮງງານເດັກ ແລະ ອາຍຸໃຊ້ແຮງງານຕ່ຳສຸດ
- ແຮງງານແບບບັງຄັບ

ຄ. ກົນໄກແກ້ໄຂຄຳຮ້ອງທຸກ

ງ. ສຸຂະພາບ ແລະ ຄວາມປອດໄພດ້ານອາຊີບ (OHS)

**ມາດຖານສິ່ງແວດລ້ອມ ແລະ ສັງຄົມ 9 ຂອງ WB ESS 9: ເງື່ອນໄຂທີ່ຈຳເປັນ**

ກ. ສິ່ງແວດລ້ອມ ແລະ ສັງຄົມ

- ລະບົບຄຸ້ມຄອງ
- ນະໂຍບາຍສິ່ງແວດລ້ອມ ແລະ ສັງຄົມ
- ລະບຽບຫຼັກການສິ່ງແວດລ້ອມ ແລະ ສັງຄົມ
- ຄວາມສາມາດ ແລະ ຄວາມຊຳນານຂອງອົງການຈັດຕັ້ງ
- ການຕິດຕາມ ແລະ ລາຍງານ

ຂ. ການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ

## ເອກະສານຊ້ອນທ້າຍ 4: ສົນທິສັນຍາພື້ນຖານຂອງອົງການແຮງງານສາກົນ ILO

ສົນທິສັນຍາຂອງ ILO ຖືກກຳນົດວ່າ ເປັນພື້ນ ແລະ ມາດຖານວ່າດ້ວຍແຮງງານ:

- ສົນທິສັນຍາວ່າດ້ວຍ ອິດສະລະພາບໃນການເປັນສະມາຄົມ ແລະ ປົກປ້ອງສິດຜູ້ອອກແຮງງານ, 1948 (No. 87)
- ສົນທິສັນຍາ ວ່າດ້ວຍ ການຈັດຕັ້ງ ແລະ ເຈລະຈາ, 1949 (No. 98)
- ສົນທິສັນຍາວ່າດ້ວຍ ແຮງງານຖືກບັງຄັບ, 1930 (No. 29)
- ສົນທິສັນຍາວ່າດ້ວຍ ລົບລ້າງແຮງງານຖືກບັງຄັບ, 1957 (No. 105)
- ສົນທິສັນຍາວ່າດ້ວຍ ແຮງງານມີອາຍຸຕໍ່າສຸດ, 1973 (No. 138)
- ສົນທິສັນຍາວ່າດ້ວຍ ຜົນເສຍຮ້າຍແຮງຂອງການໃຊ້ແຮງງານເດັກ, 1999 (No. 182)
- ສົນທິສັນຍາວ່າດ້ວຍ ຄ່າແຮງງານເທົ່າທຽມກັນ, 1951 (No. 100)
- ສົນທິສັນຍາວ່າດ້ວຍ ການເລືອກປະຕິບັດ (ໃນເລື່ອງຈ້າງງານ ແລະ ອາຊີບ), 1958 (No. 111)

**ເອກະສານຊ້ອນທ້າຍ 5: ນະໂຍບາຍແຫ່ງຊາດ, ກົດໝາຍ ແລະ ລະບຽບ**

ບັນດານິຕິກຳກ່ຽວກັບສິ່ງແວດລ້ອມໃນ ສປປລາວ ມີດັ່ງນີ້:

- ລັດຖະທຳມະນູນ, ປີ 2015
- ກົດໝາຍປົກປ້ອງສິ່ງແວດລ້ອມ, 29/ສຊ, 2012:
    - ດຳລັດນາຍົກລັດຖະມົນຕີ ວ່າດ້ວຍ ການປະເມີນຜົນກະທົບສິ່ງແວດລ້ອມ, 21/ລບ, 2019
    - ຂໍ້ແນະນຳຂອງກະຊວງ (MoNRE) ວ່າດ້ວຍ ESIA No. 8030, 2013 ແລະ No. 8029 on IEE, 2013
    - ຂໍຕົກລົງຂອງກະຊວງ ຊສ ວ່າດ້ວຍ ໂຄງການລົງທຶນ ແລະ ກິດຈະກຳ ທີ່ຕ້ອງດຳເນີນ IEE ແລະ ESIA No. 8056/ກຊສ, 2013
    - ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຊົດເຊີຍ ແລະ ການຈັດສັນຍົກຍ້າຍ ປະຊາຊົນຖືກກະທົບຈາກໂຄງການພັດທະນາ, No. 84, 2016
- ກົດໝາຍວ່າດ້ວຍ ຄຳຮ້ອງທຸກ No. 53/ສຊ, 2014
    - ຄຳສັ່ງນາຍົກລັດຖະມົນຕີ No. 10/ນຍ, 2011 ວ່າດ້ວຍ ການຫ້າມເກັບກ່ຽວ ແລະ ຊື້-ຂາຍ ສັດ-ພືດຫວງຫ້າມ
- ກົດໝາຍ ວ່າດ້ວຍ ສັດປ່າ ແລະ ສັດນໍ້າ, No. 07, 2007
- ກົດໝາຍວ່າດ້ວຍ ຊັບພະຍາກອນນໍ້າ ແລະ ນໍ້າ, No. 02/ສຊ, 2013
- ນະໂຍບາຍ ວ່າດ້ວຍ ການປະເມີນຜົນກະທົບດ້ານສຸຂະພາບ, No. 365/MOH, 2006
- ດຳລັດນາຍົກລັດຖະມົນຕີ ວ່າດ້ວຍການຄຸ້ມຄອງຢາຂ້າສັດຕູພືດe, No 258 /ລບ, 2017
- ດຳລັດນາຍົກລັດຖະມົນຕີ ວ່າດ້ວຍການປົກປ້ອງຜູ້ຊົມໃຊ້ເງິນ (No. 225/GoL, 06/042020);
- ກົດໝາຍແຮງງານ (No. 43/NA, Dec 2013)
- ກົດໝາຍ ວ່າດ້ວຍ SMEs, No. 11/NA, 21/12/2011
- ກົດໝາຍວ່າດ້ວຍວິສະຫະກິດ, No. 43/NA, 26/12/2013

**ເອກະສານຊ້ອນທ້າຍ 6: ການຈັດປະເພດ ຄວາມສ່ຽງປະເພດ "B" (ຄວາມສ່ຽງປານກາງ) ຫຼື "C" (ຄວາມສ່ຽງຕໍ່າ)**

ອີງໃສ່ ຂໍ້ແນະນໍາຂອງ KfW ວ່າດ້ວຍ ຄວາມຍືນຍົງ, ມາດຕະການຮ່ວມມືດ້ານການເງິນ (FC-measures) ຖືກຈັດປະເພດດັ່ງລຸ່ມນີ້:

**ປະເພດ ຄວາມສ່ຽງ A**: ຖ້າວ່າ ອາດມີຜົນກະທົບ ແລະ ຄວາມສ່ຽງບໍ່ດີຕໍ່ເງື່ອນໄຂສິ່ງແວດລ້ອມ ແລະ ສັງຄົມ ຂອງປະຊາຊົນຖືກກະທົບ. ຜົນກະທົບ ແລະ ຄວາມສ່ຽງ ອາດເປັນໄປໄດ້ ແລະ ຮ້າຍແຮງ ຍ້ອນລັກສະນະສະລັບຊັບຊ້ອນຂອງມາດຕະການ (FC-measure), ຂະໜາດ (ກວ້າງຂວາງ ໄປເຖິງກວ້າງໃຫຍ່ຫຼາຍ), ຄວາມອ່ອນໄຫວຕໍ່ຜົນກະທົບຂອງທີ່ຕັ້ງການຮ່ວມມື (FC-measure) ຫຼື ຜົນກະທົບ ແລະ ຄວາມສ່ຽງ ບໍ່ສາມາດຖືກປັບຄືນສູ່ສະພາບເດີມໄດ້ ຫຼື ບໍ່ສາມາດຄາດການໄດ້. ຜົນກະທົບ ແລະ ຄວາມສ່ຽງນັ້ນ ອາດກະທົບຂອບເຂດກວ້າງຂວາງ ທີ່ເກີນຂອບເຂດສະຖານທີ່ກໍ່ສ້າງ, ເກີນສິ່ງອໍານວຍຄວາມສະດວກ ຫຼື ເຂດ FC-measure ເຊິ່ງອ່ອນໄຫວກວ່າ. ສະນັ້ນ, ມາດຕະການ ຮ່ວມມືດ້ານການເງິນ (FC-measure) ຈະຖືກຈັດເປັນປະເພດ A, ຕົວຢ່າງເຊັ່ນ:

- ກະທົບຮ້າຍແຮງເຊັ່ນ ປ່າເຂດຮ້ອນ, ພູຫີນ/ຊາຍ, ເຂດອານຸລັກທໍາມະຊາດ, ດິນທາມ, ປ່າທໍາມະຊາດ, ສະຖານທີ່ມໍລະດົກທາງວັດທະນາທໍາ;
- ມີຜົນກະທົບຮ້າຍແຮງຂ້າມຊາຍແດນ ຫຼື ກ່ຽວຂ້ອງກັບສົນທິສັນຍາສາກົນ (ເຊັ່ນ ສົນທິສັນຍາວ່າດ້ວຍການຄຸ້ມຄອງສິ່ງເສດເຫຼືອ ຫຼື ອານຸລັກທະເລ ຫຼື ຂໍ້ຕົກລົງວ່າດ້ວຍການປົກປັກຮັກສາຊີວະນາໆພັນ);
- ກ້າວໄປສູ່ການຊົມໃຊ້ຊັບພະຍາກອນ ໂດຍສະເພາະ ດິນ ຫຼື ນໍ້າ;
- ກ່ຽວຂ້ອງກັບຄວາມສ່ຽງສູງ ຕໍ່ສຸຂະພາບຂອງມະນຸດ ຫຼື ຄວາມປອດໄພ (ເຊັ່ນ: ອຸດສະຫະກໍາ ຫຼື ສິ່ງອໍານວຍຄວາມສະດວກດ້ານການສັນຈອນ ເຊິ່ງຕັ້ງຢູ່ໃກ້ກັບເຂດທີ່ຢູ່ອາໄສ ມີສຽງລົບກວນ, ມົນລະພິດ, ປ່ອຍທາດອາຍພິດ ໃນຊ່ວງການກໍ່ສ້າງ/ດໍາເນີນງານ ຫຼື ກ່ຽວຂ້ອງກັບທາດອາຍ/ວັດຖຸພິດ);
- ຕ້ອງຍົກຍ້າຍຂະໜາດໃຫຍ່ ຫຼື ນໍາໄປສູ່ການສູນເສຍຊີວິດການເປັນຢູ່ຂັ້ນຮ້າຍແຮງ
- ຄາດວ່າມີຜົນກະທົບບໍ່ດີຕໍ່ປະຊາຊົນດັ່ງເດີມ (ຊົນເຜົ່າ).

**ປະເພດ ຄວາມສ່ຽງ B:** ມີຄວາມສ່ຽງ ແລະ ຜົນກະທົບບໍ່ດີຕໍ່ເງື່ອນໄຂສິ່ງແວດລ້ອມ ແລະ ສັງຄົມ, ແຕ່ໜ້ອຍກວ່າ **ປະເພດ ຄວາມສ່ຽງ** A (ມາດຕະການ FC-measures), ມີຄວາມສ່ຽງ ແລະ ຜົນກະທົບ ທີ່ສາມາດບັນເທົາຜ່ານມາດຖານ, ວິທີການບັນເທົາຜົນກະທົບທີ່ມີດີສຸດ. ຕາມແບບແລ້ວ, ຄວາມສ່ຽງ ແລະ ຜົນກະທົບ ທີ່ເປັນໄປໄດ້ ຂອງ ປະເພດຄວາມສ່ຽງ B (ມາດຕະການ FC-measures) ແມ່ນຈໍາກັດຢູ່ສະເພາະເຂດ, ສ່ວນຫຼາຍແມ່ນສາມາດປັບກັບຄືນສູ່ສະພາບເດີມໄດ້ ແລະ ງ່າຍທີ່ຈະບັນເທົາຜົນກະທົບໂດຍຜ່ານມາດຕະການອັນເໝາະສົມ. ສໍາລັບ **ປະເພດ ຄວາມສ່ຽງ B** (ມາດຕະການ FC-measures) ຈໍາເປັນຕ້ອງຕັດສິນໃຈຂອບເຂດ, ຈັດຄວາມສໍາຄັນ ແລະ ຄວາມເລິກເຊິ່ງຂອງ ການປະເມີນຜົນກະທົບ ສິ່ງແວດລ້ອມ ແລະ ສັງຄົມ ESIA ໂດຍຜ່ານການປະເມີນແຕ່ລະກໍລະນີ. ຖ້າຄາດການວ່າ **ປະເພດ ຄວາມສ່ຽງ B** (ມາດຕະການ FC-measures) ມີຄວາມສ່ຽງ ແລະ ຜົນກະທົບບໍ່ດີຂັ້ນຮ້າຍແຮງຕໍ່ ສິ່ງແວດລ້ອມ ແລະ ສັງຄົມ (**Category B+**), ຈໍາເປັນຕ້ອງປັບ ESIA, ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMP) ແລະ ລະບົບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMS) ໃຫ້ແທດເໝາະກັບ ຄວາມສ່ຽງ ແລະ ຜົນກະທົບເຫຼົ່ານີ້ ດັ່ງທີ່ໄດ້ບັນຍາຍພາຍໃຕ້ **ປະເພດ ຄວາມສ່ຽງ A.**

**ປະເພດ ຄວາມສ່ຽງ C:** ຖ້າຄາດການວ່າ ບໍ່ມີ ຫຼື ມີໜ້ອຍ (ຜົນກະທົບ ແລະ ຄວາມສ່ຽງສິ່ງແວດລ້ອມ ແລະ ສັງຄົມ) ແລະຖ້າການຈັດຕັ້ງປະຕິບັດ ແລະ ການດໍາເນີນງານ (ມາດຕະການ FC-measure) ບໍ່ຕ້ອງມີການປົກປ້ອງສະເພາະ, ການຊົດເຊີຍ ຫຼື ມາດຕະການຕິດຕາມ. **ປະເພດ ຄວາມສ່ຽງ C** (ມາດຕະການ FC-measures) ປົກກະຕິບໍ່ຕ້ອງມີການວິເຄາະເພີ່ມຕື່ມ ຕາມຂໍ້ແນະນໍາ ຫຼື ຫຼັກການກວດສອບສິ່ງແວດລ້ອມ ແລະ ສັງຄົມ ESDD. ເຖິງຢ່າງໃດກໍຕາມ, **ປະເພດ ຄວາມ**

**ສ່ວນ C** (ມາດຕະການ FC-measures) ຄວນຖືກຕິດຕາມກວດກາ ເພື່ອມີການປ່ຽນແປງທີ່ກ່ຽວຂ້ອງ ຕະຫຼອດຮອບວຽນຂອງທຸລະກິດ/ເງິນກູ້ຢືມ.

## ເອກະສານຊ້ອນທ້າຍ 7: ຂໍ້ແນະນໍາຕໍ່ PEA/PFIs/MSMEs ໃນການສ້າງ ແລະ ຈັດຕັ້ງປະຕິບັດ ລະບົບສິ່ງແວດລ້ອມ ແລະ ສັງຄົມ ESMS

ເພື່ອຈະນໍາໃຊ້ກອບນະໂຍບາຍ Framework ສະບັບນີ້ຢ່າງມີປະສິດທິຜົນ ແລະ ເຮັດໃຫ້ PEA/PFIs ຈັດຕັ້ງປະຕິບັດວຽກງານຄຸ້ມຄອງ E&S ສໍາເລັດ ແລະ ເປັນການແນະນໍາພະນັກງານ ຄຸ້ມຄອງຄວາມສ່ຽງ/ຜົນກະທົບສິ່ງແວດລ້ອມ ແລະ ສັງຄົມ, PEA ແລະ PFIs ຕ້ອງ

1) ສ້າງ/ພັດທະນາ ESMS ຂອງຕົນເອງ (ເບິ່ງເອກະສາຊ້ອນທ້າຍ 13: ຕົວວັດແທກ/ຊີ້ວັດ ESMS)
2) ສ້າງ/ພັດທະນານະໂຍບາຍ ເຊິ່ງສັງລວມພັນທະໜ້າທີ່ ໃຫ້ຖືກຕ້ອງສອດຄ່ອງກັບເງື່ອນໄຂຂອງ ກອບນະໂຍບາຍ, ກົດໝາຍແຫ່ງຊາດ, ລະບຽບ ແລະ ມາດຖານອື່ນໆ ເຊິ່ງອົງການຂອງຕົນຈະປະຕິບັດຕາມ,
3) ESMS ຕ້ອງບັນຍາຍລັກສະນະສະເພາະ ລວມມີ: ນະໂຍບາຍ ແລະ ລະບຽບຫຼັກການສິ່ງແວດລ້ອມ ແລະ ສັງຄົມ; ໂຄງຮ່າງການຈັດຕັ້ງ, ພະນັກງານຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ; ຄວາມຊໍານານ ແລະ ຄວາມສາມາດ ໃນຂົງເຂດສິ່ງແວດລ້ອມ ແລະ ສັງຄົມ;
4) ຝຶກອົບຮົມ ແລະ ສ້າງຄວາມຮູ້ຂອງອົງການຈັດຕັ້ງ, ພະນັກງານສິນເຊື່ອ ກ່ຽວກັບ ESMS ຂອງອົງການຈັດຕັ້ງຂອງຕົນ; ລະບົບການລາຍງານ; ຫຼັກການຕິດຕາມກວດກາການປະຕິບັດງານ ແລະ ກົນໄກແກ້ໄຂຄໍາຮ້ອງທຸກ. ພ້ອມນີ້, ESMS ຍັງລວມມີ ເຄື່ອງມືສະນັບສະໜູນ ເຊັ່ນ ບັນຊີກວດສອບ, ແບບອມ, ຂໍ້ແນະນໍາ ເພື່ອຊ່ວຍພະນັກງານສິນເຊື່ອ/ເງິນກູ້ ແລະ ພະນັກກ່ຽວຂ້ອງອື່ນໆ ປະເມີນ ແລະ ຄຸ້ມຄອງຄວາມສ່ຽງສິ່ງແວດລ້ອມ ແລະ ສັງຄົມ.

## ເອກະສານຊ້ອນທ້າຍ 8: ແບບຟອມປະເມີນຜົນກະທົບ (E&S)

### ແບບຟອມ/ບັນຊີ ປະເມີນ E&S (ເພື່ອປະເມີນ/ກັ່ນກອງ MSMEs/ເງິນກູ້)

| | |
|---|---|
| ຊື່ ແລະ ທີ່ຢູ່ຂອງ PFI | |
| ຊື່ຜູ້ຮ້ອງຂໍເງິນກູ້ຢືມ | |
| ປະເພດທຸລະກິດ ທີ່ຈະນໍາໃຊ້ເງິນກູ້ຢືມ | |
| ປະເມີນຈໍານວນເງິນ ທີ່ຂໍກູ້ຢືມ | |
| ວັນທີເລີ່ມ - ວັນທີ່ສິ້ນສຸດ(ສັນຍາເງິນກູ້ຢືມ) | |

**ຂໍ້ແນະນໍາ**

1. ຈົ່ງຕອບຄໍາຖາມ ຕາມບັນຊີກວດການີ້ ເພື່ອຊ່ວຍສະນັບສະໜູນ ເຫດຜົນຮ້ອງຂໍເງິນກູ້. ຈົ່ງແນບເອກະສານບັນຊີກວດການີ້ ໄປກັບຄໍາຮ້ອງຂໍເງິນກູ້/ສັນຍາ ເຊິ່ງຈະຖືກກະກຽມ ແລະ ສົ່ງມອບ ເຖິງ PFI.
2. ບັນຊີກວດການີ້ ເນັ້ນໜັກໃສ່ ບັນຫາສັງຄົມ - ສິ່ງແວດລ້ອມ (E&S) ແລະ ບັນຫາກ່ຽວຂ້ອງ ເພື່ອຮັບປະກັນວ່າ ບັນຫາຂອງ (E&S) ທີ່ກ່ຽວຂ້ອງກັບ ເງິນກູ້ຢືມ ຖືກພິຈາລະນາຢ່າງເໝາະສົມ.
3. ມີ ຈຸດປະສົງ ຊີ້ບອກ ຜົນກະທົບສັງຄົມ ແລະ ສິ່ງແວດລ້ອມ ທີ່ອາດເປັນໄປໄດ້ ຂອງທຸລະກິດ/ເງິນກູ້. ຖ້າວ່າ ມີ ໃຫ້ “ໝາຍ” ເພື່ອປຶກສາຫາລື ມາດຕະການບັນເທົ່າຜົນກະທົບ ທີ່ໄດ້ສະເໜີແນະນໍາ.

ທະນາຄານ ຮ່ວມກັບຜູ້ຮ້ອງຂໍເງິນກູ້ຢືມ ໃຊ້ແບບຟອມບນີ້ ກວດຄັດເລືອກ ເພື່ອຈັດປະເພດ ຄວາມສ່ຽງ ແລະ ປະເມີນຜົນກະທົບສິ່ງແວດລ້ອມ-ສັງຄົມ (E&S) ຕໍ່ທຸລະກິດ/ເງິນກູ້ຢືມ, ເພື່ອຕັດສິນເຄື່ອງມື ທີ່ຈະກະກຽມ ສໍາລັບທຸລະກິດ/ເງິນກູ້

| **ຄໍາຖາມ** | **ຄໍາຕອບ** | | **ຖ້າຕອບວ່າ ແມ່ນ-ທຸລະກິດຈະເປັນປະເພດ** | **ຖ້າຕອບວ່າແມ່ນ ຕ້ອງດໍາເນີນ ເອກະສານ** |
|---|---|---|---|---|
| | **ແມ່ນ** | **ບໍ່ ແມ່ນ** | | |
| ທຸລະກິດ/ເງິນກູ້ ທີ່ສະເໜີ ຄືຈະມີຜົນກະທົບ/ຄວາມສ່ຽງສິ່ງແວດລ້ອມ ໜ້ອຍ ຫຼື ບໍ່ມີ? ຈົ່ງໃຫ້ເຫດຜົນສັ້ນໆ ໄວ້ຂ້າງລຸ່ມ: | | | **ປະເພດ** C | ໃຫ້ດໍາເນີນການ ໂດຍບໍ່ມີການກວດສອບ E&S ໃນຕໍ່ໜ້າ |
| ທຸລະກິດ/ເງິນກູ້ ທີ່ສະເໜີ ຄືຈະມີຜົນກະທົບ/ຄວາມສ່ຽງສິ່ງແວດລ້ອມປານກາງ? ຈົ່ງໃຫ້ເຫດຜົນສັ້ນໆ ໄວ້ຂ້າງລຸ່ມ: | | | ໃຫ້ຂໍ້ແນະນໍາກ່ຽວກັບມາດຕະການບັນເທົາຜົນກະທົບ | ພະນັກງານສິນເຊື່ອ ຫຼື ພະນັກງານຖືກແຕ່ງຕັ້ງ ໃຫ້ຂໍ້ແນະນໍາວິທີທາງປະຕິບັດ |

| | |
|---|---|
| **ການກວດສອບ ແລະ ການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ** | |
| - ຢືນຢັນທຸລະກິດ/ເງິນກູ້ນີ້ ບໍ່ຢູ່ໃນປະເພດຄວາມສ່ຽງ A ຫຼື ບໍ່ຢູ່ໃນບັນຊີຕ້ອງຫ້າມ<br>- ທຸລະກິດນີ້ ຢູ່ໃນປະເພດຄວາມສ່ຽງ B+ ຫຼື C ?<br>☐ B+ ☐ C | ປະເພດຄວາມສ່ຽງ C – ຈິ່ງດຳເນີນການ ໂດຍບໍ່ມີການກວດສອບ E&S ໃນຕໍ່ໜ້າ<br>ປະເພດຄວາມສ່ຽງ B+ – ໂຈະ/ຢຸດໃຫ້ທຶນ |
| **1. ຄວາມຖືກຕ້ອງສອດຄ່ອງກັບລະບຽບ ແລະ ກົດໝາຍແຫ່ງຊາດ ວ່າດ້ວຍສິ່ງແວດລ້ອມ ແລະ ສັງຄົມ** | |
| ຜູ້ປະກອບການ/ຜູ້ຮ້ອງຂໍກູ້ຢືມເງິນ ມີໃບອານຸຍາດທັງໝົດ ຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ?<br>☐ ມີ ☐ ບໍ່ມີ | ລາຍການ<br>1) ……………………………………………<br>2) …………………………………………… |
| **2. ຄວາມປອດໄພ ແລະ ສຸຂະພາບຂອງການດຳເນີນອາຊີບ** | |
| ທຸລະກິດ/ກິດຈະກຳ ຈະກໍໃຫ້ເກີດຄວາມສ່ຽງອຸປະຕິເຫດຮ້າຍແຮງ (ເຊັ່ນ ອັກຄີໄຟ, ລະເບີດ, ການຮົ່ວໄຫຼຂອງເຄມີ ຫຼື ສານພິດ)? | ☐ ແມ່ນ ☐ ບໍ່ແມ່ນ<br>ຖ້າແມ່ນ ວາງມາດຕະການແກ້ໄຂແນວໃດ? |
| **3.** ແຮງງານ | |
| ຂະໜາດຂອງກຳລັງແຮງງານເທົ່າໃດ? | |
| ອາຍຸຕໍ່າສຸດຂອງກຳມະກອນ/ແຮງງານ-ຈັກປີ? | |
| ມີບັນຫາຄວາມຂັດແຍ່ງຂອງແຮງງານ ຄ້າງຄາບໍ? | |
| ຂ້າພະເຈົ້າຢັ້ງຢືນວ່າ ທຸລະກິດ/ເງິນກູ້ນີ້ ບໍ່ກ່ຽວຂ້ອງກັບການເວນຄືນ/ຄອບຄອງທີ່ດິນ, ກຸ່ມຊົນເຜົ່າ, ວຽກກໍ່ສ້າງ. ສະນັ້ນ ບໍ່ຈຳເປັນມີມາດຕະການປົກປ້ອງ, ແກ້ໄຂ ກອບນະໂຍບາຍ ESMF. ທຸລະກິດ/ເງິນກູ້ຖືກຈັດຢູ່ປະເພດຄວາມສ່ຽງ **………………**<br><br>ວັນທີ : ……………**….** ຊື່ ແລະ ລາຍເຊັນຂອງພະນັກງານປະຕິບັດການປະເມີນ/ກັ່ນກອງຜົນກະທົບ ແລະ ຄວາມສ່ຽງ E&S | |

**ແບບຟອມ/ບັນຊີ ປະເມີນ E&S (ເພື່ອປະເມີນ/ກັ່ນກອງ PFIs)**

| ຊື່ ແລະ ທີ່ຢູ່ຂອງ PFI | |
|---|---|

**ຂໍ້ແນະນຳ**

1. ຈົ່ງຕອບຄຳຖາມ ຕາມບັນຊີກວດການີ້ ເພື່ອຊ່ວຍສະນັບສະໜູນ ຄວາມຖືກຕ້ອງຕາມເງື່ອນໄຂຂອງ PFIs. ຈົ່ງແນບເອກະສານບັນຊີກວດການີ້ ໄປກັບສັນຍາ PFIs ຫຼື ເງື່ອນໄຂ ເຊິ່ງຈະຖືກກະກຽມ ແລະ ສົ່ງມອບ ເຖິງ PEA/LAFF.
2. ບັນຊີກວດການີ້ ເນັ້ນໜັກໃສ່ ບັນຫາສັງຄົມ - ສິ່ງແວດລ້ອມ ແລະ ບັນຫາກ່ຽວຂ້ອງ ເພື່ອຮັບປະກັນວ່າ ບັນຫາຂອງ (E&S) ທີ່ກ່ຽວຂ້ອງກັບການປະເມີນ ແລະ ຄັດເລືອກ PFIs ໄດ້ຮັບການປະເມີນ.
3. ມີ ຈຸດປະສົງ ຊີ້ບອກ ນະໂຍບາຍ ສັງຄົມ-ສິ່ງແວດລ້ອມ ແລະ ອື່ນໆ ຂອງ PFIs.

PEA/LAFF ຮ່ວມກັບ PFI ຊອກຄົ້ນ ບັນຫາ ສິ່ງແວດລ້ອມ-ສັງຄົມ.

ຄຳຖາມກ່ຽວກັບການນຳໃຊ້ ມາດຖານການດຳເນີນງານ 1, 2 (**PS 1, PS2**) ແລະ **EHS** ທີ່ກ່ຽວຂ້ອງ (ເຊັ່ນ **ILO**)

**<u>PS 1: ປະເມີນ ແລະ ຄຸ້ມຄອງຄວາມສ່ຽງ ແລະ ຜົນກະທົບ ສິ່ງແວດລ້ອມ ແລະ ສັງຄົມ E&S</u>**

| Sr. | ຄຳຖາມ | ຄຳຕອບ | | ຖ້າຕອບ "ແມ່ນ" | ເອກະສານທີ່ຕ້ອງການ (ຖ້າຕອບວ່າ: ແມ່ນ) |
|---|---|---|---|---|---|
| | | ແມ່ນ | ບໍ່ແມ່ນ | | |
| | PFI ຂອງທ່ານ ມີນະໂຍບາຍ (ຄຳຖະແຫຼງ) ເຊິ່ງກຳນົດຈຸດປະສົງ ແລະ ຫຼັກການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ ທີ່ແນະນຳການປະຕິບັດງານ E&S ຂອງ PFI? | | | ເອກະສານ | ອັດເອກະສານໃຫ້ PEA/LAFF |
| **PFI ຂອງທ່ານ ມີເອກະສານກ່ຽວກັບຫົວຂໍ້ດັ່ງລຸ່ມນີ້ບໍ?** | | | | | |
| | ການກຳນົດຄວາມສ່ຽງ ແລະ ຜົນກະທົບ E&S | | | ເອກະສານ | ອັດເອກະສານໃຫ້ PEA/LAFF |
| | ຄວາມສາມາດ ແລະ ຄວາມຊຳນານ ໃນດ້ານ E&S | | | ເອກະສານ | ອັດເອກະສານໃຫ້ PEA/LAFF |
| | ການກວດກາ ແລະ ຕິດຕາມ E&S | | | ເອກະສານ | ອັດເອກະສານໃຫ້ PEA/LAFF |
| | ການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງໃນວຽກງານ E&S | | | ເອກະສານ | ອັດເອກະສານໃຫ້ PEA/LAFF |
| | ການຕິດຕໍ່ສື່ສານກັບພາຍນອກ ແລະ ກົນໄກແກ້ໄຂຄຳຮ້ອງທຸກ | | | ເອກະສານ | ອັດເອກະສານໃຫ້ PEA/LAFF |

**ຄວາມຖືກຕ້ອງສອດຄ່ອງກັບກົດໝາຍລັດ, ກົດລະບຽບ ແລະ PS 2: ແຮງງານ ແລະ ເງື່ອນໄຂການເຮັດວຽກ.**

| No. | ຄຳຖາມ | ຄຳຕອບ | | ຖ້າ "ແມ່ນ" | ເອກະສານທີ່ຕ້ອງການ (ຖ້າຕອບແມ່ນ |
|---|---|---|---|---|---|
| | | ແມ່ນ | ບໍ່ແມ່ນ | | |
| **ນະໂຍບາຍ ແລະ ການຄຸ້ມຄອງຊັບພະຍາກອນມະນຸດ HR** | | | | | |
| | PFI ມີນະໂຍບາຍ HR ເຊິ່ງຖືກຕ້ອງກັບເງື່ອນໄຂຂອງກົດໝາຍລັດ ແລະ PS2? | | | **ເອກະສານ** | ອັດເອກະສານໃຫ້ PEA/LAFF |
| **ບໍ່ເລືອກປະຕິບັດ ແລະ ມີໂອກາດເທົ່າທຽມກັນ** | | | | | |
| | PFI ມີລະບຽບຫຼັກການຈະແຈ້ງເປັນລາຍລັກອັກສອນ ຮັບປະກັນວ່າ ດຳເນີນການຕັດສິນວ່າຈ້າງງານບໍ່ແມ່ນອີງໃສ່ລັກສະນະສ່ວນຕົວ ທີ່ບໍ່ກ່ຽວຂ້ອງກັບເງື່ອນໄຂວຽກງານ? | | | | |

| |
|---|
| **ສະຫຼຸບ/ລົງຄວາມເຫັນ:**<br><br>ວັນທີ ………. ກັ່ນກອງ/ປະເມີນໂດຍ(ຊື່): …………………………………ລາຍເຊັນ…................................. |
| ໂຄງການ LAFF<br>ວັນທີ ………… ລາຍເຊັນ ……………<br><br>ຊື່………………………………………….. |

**ເອກະສານຊ້ອນທ້າຍ 9: ຂະບວນການ/ຂັ້ນຕອນການປະເມີນ/ກັ່ນກອງການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ**



**ເອກະສານຊ້ອນທ້າຍ 10: ກົດໝາຍ ແລະ ລະບຽບຫຼັກການ ທີ່ກ່ຽວຂ້ອງກັບ MSMEs**

- ກົດໝາຍປົກປ້ອງສິ່ງແວດລ້ອມ, ເລກທີ 29/ສຊ, 2012:
- ດຳລັດນາຍົກລັດຖະມົນຕີ ວ່າດ້ວຍການປົກປ້ອງຜູ້ຊົມໃຊ້ການເງິນ (ເລກທີ 225/ລບ, 06/042020);
- ກົດໝາຍແຮງງານ (ເລກທີ 43/ສຊ, 12/2013)
- ກົດໝາຍວ່າດ້ວຍການສົ່ງເສີມ SMEs, ເລກທີ 11/ສຊ, 21/12/2011
- ກົດໝາຍວ່າດ້ວຍວິສະຫະກິດ, ເລກທີ 43/ສຊ, 26/12/2013

**ເອກະສານຊ້ອນທ້າຍ 11: ແບບຟອບ/ການສັງລວມລາຍງານການດຳເນີນວຽກງານ E&S**

ຊື່ທະນາຄານ **(PFI) ……………………………………………………..……………………………………**

| ລາຍງານໂດຍ (ຊື່, ໜ້າທີ່, ຕຳແໜ່ງ): | ຊື່ທຸລະກິດ/ເງິນກູ້ຢືມ (ທີ່ນຳໃຊ້): | ວັນທີປ່ອຍເງິນກູ້**:** |
|---|---|---|
| | | |

**ສະພາບການ ແລະ ການສັງເກດ**:

| ລາຍການ/ການສອບຖາມ | ຄຳຕອບ-ແມ່ນ/ບໍ່ແມ່ນ | ລາຍລະອຽດ |
|---|---|---|
| 1. ມີໃບອະນຸຍາດຄົບຖ້ວນ ແລະ MSMEs ດຳເນີນງານຖືກຕ້ອງກັບກົດລະບຽບລັດທຸກປະການ? | | |
| 2. MSMEs ດຳເນີນງານຖືກຕ້ອງກັບເງື່ອນໄຂ Framework? ຖ້າບໍ່, ມີຂໍ້ບົກຜ່ອງຫຍັງ ແລະ ຕ້ອງປະຕິບັດຫຍັງແດ່ ເພື່ອໃຫ້ຖືກຕ້ອງ? | | |
| 3. MSMEs ພົບບັນຫາໃດທີ່ບໍ່ໄດ້ຄາດການໄວ້ ກ່ຽວກັບ E&S ແລະ ແກ້ໄຂແນວໃດ? ມີສື່ໂຊເຊຍມີເດຍກ່າວເຖິງບໍ, ມີການຮ້ອງທຸກ ຫຼື ຄວາມຮັບຜິດຊອບຕໍ່ບັນຫາທີ່ຍັງຄ້າງຄາ? | | |
| 4. ຄຳຄິດເຫັນອື່ນໆ | | |

**ເອກະສານຊ້ອນທ້າຍ 13: ສັງລວມຕົວຊີ້ວັດ/ວັດແທກອັນພື້ນຖານ ສໍາລັບ ລະບົບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMS)**

ຕົວຊີ້ວັດ/ວັດແທກ ສະແດງໃຫ້ເຫັນສະພາບການໃນເວລາສະເພາະ ຫຼື ຊ່ວງການວາງແຜນ. ຕົວຊີ້ວັດ/ວັດແທກ ES ເຊິ່ງກ່ຽວຂ້ອງກັບແຕ່ລະພາກ ແມ່ນສັງລວມໄວ້ຂ້າງລຸ່ມນີ້, ແຕ່ບໍ່ໄດ້ຈໍາກັດພຽງແຕ່ເທົ່ານີ້.

| Sr. | ຫົວຂໍ້/ການສອບຖາມ | ຕົວຊີ້ວັດ/ວັດແທກ | ຜູ້ຮັບຜິດຊອບ |
|---|---|---|---|
| I. | **ລະບົບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMS)** | | |
| **1.1 ນະໂຍບາຍ** | | | |
| | 1.1.1 ມີການປັບ ESMS ຫຼື ຫຼັກການ ທັນກັບສະພາບບໍ? | ຂໍ້ຄວາມ/ເນື້ອໃນທີ່ປັບ | PEA/PFI |
| | 1.1.2 ມີຂໍ້ມູນກ່ຽວກັບວຽກງານສູ່ສາທາລະນະຊົນບໍ? | ການເປີດເຜີຍຂໍ້ມູນຜ່ານເວບໄຊຂອງ PEA/PFI's Website | PEA/PFI |
| **1.2 ກົດໝາຍລັດ ແລະ ລະບຽບຫຼັກການ/ເງື່ອນໄຂ** | | | |
| | 1.2.1 ມີທຸລະກິດ ທີ່ໄດ້ດໍາເນີນໄປ ໂດຍບໍ່ຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບຫຼັກການ/ເງື່ອນໄຂບໍ? | ຈໍານວນທຸລະກິດ ທີ່ດໍາເນີນບໍ່ຖືກຕ້ອງ | PEA/PFI |
| | 1.2.2 ມີການຮ້ອງທຸກເປັນລາຍລັກອັກສອນຕໍ່ກິດຈະກໍາ/ທຸລະກິດ/ເງິນກູ້ຂອງ PEA/PFIs ບໍ? | ຈໍານວນຮ້ອງທຸກທີ່ຖືກແກ້ໄຂ/ບໍ່ຖືກແກ້ໄຂ (ຄ້າງຄາ) | PEA/PFI/MSMEs |
| | 1.2.3 ທຸກທຸລະກິດ/ກິດຈະກໍາ ໄດ້ຖືກປະເມີນ/ກັ່ນກອງ E&S? | ຈໍານວນທຸລະກິດ/ກິດຈະກໍາຜ່ານ/ຖືກປະຕິເສດຕາມບັນຊີຕ້ອງຫ້າມ | PEA/PFI |
| **1.3 ລະບຽບຫຼັກການ** | | | |
| | 1.3.1 ມີຄວາມຫຍຸ້ງຍາກ ຫຼື ອຸປະສັກຫຍັງ ທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດລະບຽບຫຼັກການ E&S? | (ຖ້າມີ) ຍົກຫົວຂໍ້ຂຶ້ນມາ ແລະ ການແກ້ໄຂ ທີ່ໄດ້ປະຕິບັດ | PEA/PFI/MSMEs |
| | 1.3.2 ມີບັນຫາ E&S ເຊິ່ງກ່ຽວຂ້ອງກັບຜູ້ກູ້ຢືມບໍ ໃນຊ່ວງການລາຍງານ? | (ຖ້າມີ) ຍົກຫົວຂໍ້ຂຶ້ນມາ ແລະ ການແກ້ໄຂ ທີ່ໄດ້ປະຕິບັດ | PEA/PFI/MSMEs |
| | 1.3.3 PEA/PFI ໄດ້ກວດກາການປະຕິບັດທຸລະກິດ ຫຼື ກິດຈະກໍາຂອງຕົນເອງບໍ? | ຄວາມຖີ່ຂອງການກວດກາ | PEA/PFI |

| Sr. | ຫົວຂໍ້/ການສອບຖາມ | ຕົວຊີ້ວັດ/ວັດແທກ | ຜູ້ຮັບຜິດຊອບ |
|---|---|---|---|
| | 1.3.4 ມີກໍາມະກອນເກີດອຸປະຕິເຫດ, ເຈັບ ຢູ່ການດໍາເນີນອາຊີບບໍ? | ຈໍານວນອຸປະຕິເຫດ ແລະ ຜູ້ເຈັບ | PEA/PFI/MSMEs |
| | 1.3.5 ມີຄໍາຮ້ອງທຸກຕໍ່ກັບ MSMEs? | ຈໍານວນການຮ້ອງທຸກ ແລະ ແກ້ໄຂແນວໃດ | PEA/PFI/MSMEs |
| | 1.3.6 ມີການວິຈານຂອງສື່ສານມວນຊົນຕໍ່ກັບ MSMEs ບໍ? | (ຖ້າມີ) ຍົກເນື້ອຄວາມໃຫ້ເຫັນ | PEA/PFI/MSMEs |
| **1.4 ອົງການຈັດຕັ້ງ ແລະ ຄວາມຮັບຜິດຊອບ** | | | |
| | 1.4.1 ໄດ້ສົ່ງບົດລາຍງານການປະຕິບັດ E&S ກົງກັບເວລາບໍ? | ກໍານົດເວລາຂອງການສົ່ງ | PEA/PFI |
| | 1.4.2 ພະນັກງານ E&S ຫຼື ພະນັກງານຖືກແຕ່ງຕັ້ງ ມີຂອບເຂດການດໍາເນີນໜ້າວຽກຈະແຈ້ງບໍ ToR? | ຜົນຮັບການດໍາເນີນງານຂອງພະນັກງານ E&S | PEA/PFI |
| **1.5 ຊັບພະຍາກອນ ແລະ ຄວາມສາມາດ** | | | |
| | 1.5.1 ມີພະນັກງານ E&S ເຊິ່ງພ້ອມດ້ວຍຄຸນວຸດທິພຽງພໍບໍ? | ຈໍານວນພະນັກງານທີ່ມີ ແລະ ໄດ້ຝຶກອົບຮົມ E&S | PEA/PFI |
| | 1.5.2 ມີແຜນການກໍ່ສ້າງຄວາມສາມາດດ້ານ E&S ບໍ? | ຈໍານວນການຝຶກອົບຮົມ E&S ທີ່ໄດ້ສະໜອງຕາມແຜນການວາງໄວ້ | PEA/PFI |
| **1.6 ການເກັບຮັກສາເອກະສານ** | | | |
| | 1.6.1 ອບປະເມີນ E&S ແລະ ເອກະສານສະນັບສະໜູນຖືກເກັບຮັກສາເປັນລະບົບບໍ? | ເຂົ້າເຖິງລະບົບເກັບເອກະສານໄດ້ງ່າຍ | PEA/PFI |